

# ເດືອນລັບແລ

ທິດາຈັນ
ພອງເພັດ ບົວພະຈັນ

# ເດືອນລັບແລ

ໂດຍ *ທິດາຈັນ*
*ພວງເພັດ ບົວພະຈັນ*

ຈັດພິມໂດຍ
ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

ອຸປະຖຳໂດຍ
ອົງການອຸຍນິເຊັບ ( UNICEF )

ເດືອນລັບແລ

ໂດຍ ທິດາຈັນ

ພວງເພັດ ບົວພະຈັນ

© ສະຫງວນລິຂະສິດ

ແຕ້ມຮູບໜ້າປົກ : ກອງແລ ນະອິງຮັງ

ແຕ້ມຮູບປະກອບ : ກອງແລ ນະອິງຮັງ

ດວງແຂ ບຸນຍາວົງ

ຈັດພິມໂດຍ ກົມວັນນະຄະດີ ແລະ ວັດທະນະທໍາມະຫາຊົນ

ອຸປະຖໍາໂດຍ ອົງການອຸຍນີເຊັຍ ( UNICEF )

ພິມທີ່ ໂຮງພິມສຶກສາ

ຕາມ ທ.ບ.009 / ພທປ 071195

ພິມເທື່ອທີໜຶ່ງ 1996

ຈໍານວນ 2.000 ຫົວ

# ຄະນະຈັດພິມ

**ເຈົ້າຂອງໂຄງການ :** ກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

**ທີ່ປຶກສາ :** ດຣ. ທອງຄຳ ອ່ອນມະນີສອນ ຫົວໜ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

**ຜູ້ດຳເນີນງານ :** ດາລາ ກັນລະຍາ ຄະນະກຳມາທິການແຫ່ງຊາດ ເພື່ອກອງປະຊຸມແມ່ຍິງໂລກຄັ້ງທີ 4, ຮອງຫົວໜ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

**ບັນນາທິການເນື້ອໃນ :** ດາລາ ກັນລະຍາ

ອຸທິນ ບຸນຍາວົງ

ບຸນທະນອງ ຊົມໄຊຜົນ

ບຸນເສີນ ແສງມະນີ

ວຽງຄໍາ ນັນທະວົງດວງສີ

**ບັນນາທິການສິນ :** ດວງເດືອນ ບຸນຍາວົງ

ໂອທອງ ຄໍາອິນຊູ

ຈະເລີນໄຊ ພົມມະວົງສາ

ຈັນເພັດ ຄໍາຟອງ

**ກອງເລຂາ :** ວຽງຄໍາ ນັນທະວົງດວງສີ ຜູ້ປະສານງານ

ຈັນສະໝຸດ ທິລະກຸນ ຜູ້ປະສານງານ ດ້ານສິ່ມວນຊົນ

ສີສຸພັນ ດວງມະນີ ບັນຊີການເງິນ

# ສາລະບານ


| | | |
|---|---|---|
| ຄຳນຳ | ໜ້າ | ກ |
| ສາກລະຄອນແຫ້ | | 1 |
| ເດືອນລັບແລ | | 16 |
| ທາງສາຍຜ່ານ | | 38 |
| ຂອງຝາກອາຖັນ | | 48 |
| ແດ່ ຜູ້ເປັນແມ່ | | 58 |

# ຄໍານໍາ

ການພັດທະນາຊັບພະຍາກອນມະນຸດ ເປັນບັນຫາສໍາຄັນຂອງແຜນພັດທະນາ ເສດຖະກິດ - ສັງຄົມຂອງລາວ. ເພື່ອຈຸດປະສົງດັ່ງກ່າວ ການອ່ານປື້ມເປັນປັດໄຈໜຶ່ງທີ່ຂາດບໍ່ໄດ້ ເພື່ອສ້າງໃຫ້ຄົນມີຄຸນນະພາບ ທັງໃນແງ່ຄວາມສາມາດ ແລະ ຄຸນນະທໍາ ແລະ ປື້ມທຸກປະເພດທຸກລະດັບ ເປັນສິ່ງຈໍາເປັນ. ສະເພາະປີ 1995 ນີ້ ເປັນປີສໍາຄັນຂອງແມ່ຍິງທົ່ວໂລກ ໂດຍສະຫະປະຊາຊາດ ໄດ້ຈັດກອງປະຊຸມແມ່ຍິງໂລກຂຶ້ນທີ່ປັກກິ່ງ ນະຄອນຫລວງຂອງ ສ.ປ.ຈີນ ໃນໂອກາດດັ່ງກ່າວ ພວກເຮົາ ຄະນະກໍາມະການຈັດພິມສື່ການສຶກສາ ສໍາລັບແມ່ຍິງ ຈຶ່ງຈັດພິມປື້ມໂຮມເລື່ອງສັ້ນ

ແລະ ບົດກະວີ ທີ່ມີເນື້ອໃນກ່ຽວກັບແມ່ຍິງຂຶ້ນ ເພື່ອເປັນການສ້າງບັນຍາກາດຟົດຟື້ນ ໃຫ້ແກ່ກອງປະຊຸມ ແລະ ເພື່ອໃຫ້ເປັນສື່ການສຶກສາ ໂດຍຜ່ານ ບົດວັນນະຄະດີ.

ຄະນະພວກເຮົາ ຂໍຂອບໃຈອົງການ ອຸຍນິເຊັບ (UNICEF) ທີ່ໃຫ້ທຶນສະໜັບສະໜູນ ການພິມປຶ້ມຊຸດນີ້ ແລະ ຂອບໃຈບັນດານັກຂຽນ, ນັກກະວີ ທີ່ໄດ້ປະກອບສ່ວນຢ່າງເຕັມທີ່ ຈົນປຶ້ມຊຸດນີ້ສໍາເລັດເປັນຜົນອອກມາ.

ດາຣາ ກັນລະຍາ

ຫົວໜ້າໂຄງການ,

# ສາກລະຄອນແຫ້

*ທິດາຈັນ*

ພໍ່ຂ້ອຍຂຶ້ນທວິດທິວຂັ້ນໄດ ຕຶ່ງຄໍາເພື່ອນເກົ່າຂອງຂ້ອຍກໍ່ຟ້າວພຸດລຸກຈາກແປ້ນກີ່ ມາຕົບຫລັງຕີແກ້ມຂ້ອຍຢ່າງກະຍັກກະຍັ່ນ ທາງປາກມັນກໍ່ຮ້ອງກາກໆ ສັບພະປີແຕ່ຄວາມມັນຢາກຫົວງ.

- ປະໂທເອີຍ ! ແມ່ນພະຍຸລົມແດງທິດໃດເປົ່າໂຕປີວມາຕົກນີ້, ຈັ່ງແມ່ນມາຖືກຍາມ ! ຫວ່າງນີ້ເກືອບບໍ່ມີຄືນໃດເຮົາບໍ່ຝັນເຫັນໜ້າໂຕ! ຈັ່ງແມ່ນມັນຕຸ້ຍມັນຕຶງບໍ່ມີມື້ລົງ! ຄືຊິບໍ່ຖ້າຖາມລະນໍວ່າ ແຂງແຮງຫລື

24/VII

ບໍ່ ? ເອີ່ນໍ ຍັງລູກຜົວຄອບຄົວໂຕເດ ຢູ່ດີມີແຮງຊູ່ຜູ່ຊູ່ຄົນ ຕື້ບໍ ? ໄດ້ຕື່ມຈັກຊີວິດແລ້ວບໍ ? ໄປຢູ່ໃນເມືອງ ໃນນາ ແລ້ວກໍ່ຈົ່ມປີ້ງ, ດັບກິ່ນດັບຂ່າວປານປ່ອຍອ່ຽນລົງຕົມ ປະໃຫ້ ຊຸມເຮົາຄຶດຮອດເອົາແທ້ເອົາວ່າ, ນາ, ນານັ່ງພີ້ ສຳພາດ ກັນດີໆກ່ອນ - ເອົາລາກຂ້ອຍໄປຍັດໃສ່ຕັ່ງຫວາຍ ແຕ່ຂ້ອຍ ເບືອນລົງນັ່ງສາດຢູ່ກາງເຮືອນ

- ເອົາເຊີນກິນນໍ້າ, ເທື່ອນີ້ມີກຽດ ເປັນແຂກເດີ ... ນໍ້າຕົ້ມຢາຫົວແຊບໆ, ໂຕມາວຽກແດ່ ແມ່ນບໍ່, ເຮົາຫາກ ຄິດແລ້ວ, ຄັນບໍ່ມີວຽກຈ້າງເພິ່ນກໍ່ບໍ່ມາແວ່ຢາມ ໄທບ້ານເຮົາ, ໃຜໆກໍ່ຈົ່ມຄຶດຮອດໂຕໄດຫັ້ນ ... ເວົ້າແທ້ ກໍ່ບໍ່ໄກກັນ ພໍສິບຊາວຫລັກ. ຫາກຫາໂອກາດໄປມາຫາສູ່ຍາກໆເນາະ ນີ້ນີ້ ລູກເຮົາກໍ່ໄປອອກແຮງງານຢູ່ໂຮງຮຽນເອົາຫມົດ ຍັງແຕ່ ອີນ້ອຍ ຫລິ້ນຢູ່ກ້ອງຕະລ່າງນັ້ນເດ ... ສ່ວນພໍ່ເອົາກໍ່ໄປວຽກ ຄໍາບໍ່ຢືນ ຄືນບໍ່ຢູ່ແລ້ວເດດຽວນີ້.

ຂ້ອຍໄດ້ແຕ່ຫົວຍຸ້ມໆ ແລະ ອື່ໆ ຫືໆ ແບບຕົກ ທ່າເປັນຝ່າຍຮັບຟັງຕາມເດີມ ເພາະນິໄສຄວາມປາກ

ຄວາມລົມ ອັນທາງຈຸດທາງຈຳບໍ່ໄດ້ຂອງຕັ່ງຄຳ ແລະ ສິ່ງທີ່ຂ້ອຍຄິດຈະຖ້ອຍຖາມ ມັນກໍ່ເດົາອອກກ່ອນ ແລະ ຕອບໄປລ່ວງໜ້າເປັນເລົາເປັນລວາດດຽວ. ດົນເຕີບຂ້ອຍຈຶ່ງໄດ້ໂອກາດ ເປັນຝ່າຍເວົ້າ.

- ເຮົາລົງມາຕິດຕາມກວດກາ ຂະບວນເຝິກຫັດສອນ ຂອງນັກສຶກສາທີ່ມາເຝິກຫັດຢູ່ໂຮງຮຽນອຸດົມ ນີ້ເດ, ແຕ່ຕົ້ນຕໍ ແມ່ນຄິດຮອດພວກໂຕ ແລະ ບ້ານບ່ອນຢູ່ເກົ່າ, ເຮົາຈຶ່ງຂໍລົງມາໂຮງຮຽນນີ້ ...

ຫລັງຈາກຊັກເລື່ອງທີ່ງອຍສິບງອຍປາກມາລົມສູ່ກັນຟັງແລ້ວ ພວກຂ້ອຍໄດ້ເຈາະລົງເລື່ອງໃນໃຈຂອງກັນ ແລະ ກັນຢ່າງບໍ່ຮູ້ໝົດເປັນ, ເປັນຕົ້ນເລື່ອງໝັ້ນແລງແກງງາຍ, ເລື່ອງລູກຜົວ ທີ່ເຄີຍຮູ້ເຫັນນຳກັນແຕ່ກ່ອນ.

- ເປັນແນວໃດແລ້ວເລື່ອງຜົວເມຍພວກໂຕ ? ເປັນເຜິ້ງປ່ຽງດຽວແລ້ວບໍ ? ຂ້ອຍຊັກຖາມ.

- ເລື່ອງນັ້ນມັນຍາວຫລາຍ - ເອົາກິນສິ້ນກ່ອນ

ແລ້ວເຮົາຈະເລົ່າໃຫ້ໂຕຟັງ. ເລື່ອງມັນຄືທັງນິທານ ຄືທັງລະຄອນ - ນ້ອງສາວຂອງຕົ່ງຄໍາ, ນາງກິ່ງຄໍາ ຍົກພາເຂົ້າມາວາງຕໍ່ຫນ້າພວກຂ້ອຍ. ຈານຕໍາຫມາກຫຸ່ງເທິ່ນ ຫອມຮຸ່ນໆ, ຈານຂຽບຫມູ, ໃບຜັກສະຫລັດ, ຍອດຜັກບົ້ງອ່ອນ, ກ້ານທູນ ແຝງກັບຢູ່ຈານຫນຶ່ງອີກ, ພວກຂ້ອຍເລີ່ມລົງມືກິນ, ຕົ່ງຄໍາກໍ່ເລີ່ມເປີດຫົວເລື່ອງ :

- ເລື່ອງຜົວເມຍເຮົາ ກໍ່ຄືໂຕຮູ້ຫວ່າງປີກາຍພຸ້ນແລ້ວ. ແຕ່ດຽວນີ້ມັນກົງກັນຂ້າມກັບຄາວນັ້ນ ປານໄດ້ຜົວໃຫມ່ຫມູ່ເອີຍ. ຄຶດໄປລຶກໆກໍ່ພໍເດົາສາເຫດມັນອອກຢູ່ດອກ. ຕອນນັ້ນກໍ່ຄືໂຕເຫັນ ພຸ້ນແລ້ວ ເຮົາເບື່ອຫນ່າຍຊີວິດ, ເຮົາຫມົດຫວັງ. ເຮົາບໍ່ນຶກບໍ່ຝັນວ່າ ສະພາບຄອບຄົວເຮົາຈະມີມື້ ...

- ເລື່ອງມັນເປັນແນວໃດ? ຮີບເລົ່າເບິ່ງດູ. ຂ້ອຍຮ້ອນໃຈ ຍ້ອນຄວາມເປີດຫົວເລື່ອງຂອງມັນຍາວໂພດ. ເມື່ອຮູ້ວ່າຂ້ອຍປ້ອງເອົາມັນເຂົ້າສູ່ໂຄງເລື່ອງ ມັນຈຶ່ງເລົ່າ :

- ພວກເຮົາຜິດກັນຢ່າງຮຸນແຮງຫລາຍໆຄັ້ງ, ພາຍ

ຫລັງໂຕຍ້າຍຈາກນີ້ໄປ ພວກເຮົາກໍ່ຍັງໄດ້ເວົ້າ ຄວາມກັນ, ເອົາການຈັດຕັ້ງ, ເອົາເຖົ້າແກ່ມາເວົ້າຄວາມກັນຫລາຍເທື່ອອີກ, ສຽງຕົບມືດັງຂຶ້ນກໍ່ຍ້ອນມື ທັງສອງເບື້ອງ, ແຕ່ຜູ້ກໍ່ເລື່ອງທຸກໆຄັ້ງ ຕັ້ງແມ່ນລາວເອງ. ຄົນລາວບໍ່ກິນເຫລົ້າບໍ່ຫລິ້ນໄພ້ນີ້ໃດ, ລາວກໍ່ເປັນຄົນດີທຳມະດາຄືບ້ານເມືອງນີ້ແລ້ວ, ຖ້າຮ້າຍເຫລົ້າລົງຮອດສອງສາມຈອກແລ້ວ, ກໍ່ແມ່ນເລີ່ມລົງເຮືອນນີ້ຕໍ່ເຮືອນໃຫມ່ ວ່າແຕ່ບ່ອນໃດຊຸມແຊວ, ມີຫລິ້ນມີກິນ, ໄປ ... ຢ່າງບໍ່ຮູ້ເຮືອນຮູ້ຊານ, ລືມສ້າງລືມສາ, ເຮົາກໍ່ວ່າຊິບໍ່ຍືນນຳກັນໄດ້ແລ້ວ. ແຕ່ບັງເອີນມີໄລຍະຫນຶ່ງ ລາວມີການປ່ຽນແປງ ຢ່າງບໍ່ເຄີຍເປັນ, ຊິເວົ້າວ່າ ຍ້ອນການຈັດຕັ້ງສຶກສາອົບຮົມກໍ່ຫາກແມ່ນ, ແຕ່ບໍ່ແມ່ນແຕ່ທໍ່ນັ້ນດອກ, ເຮົາມາຄືດໆຜູ້ດຽວ ຄືຊິແມ່ນລູກສາວເອົາບົດຮຽນໃຫ້ແດ່.

- ບົດຮຽນແນວໃດ ? ອ້ອຍສໍ້ອີກ.

- ນີ້ຫນຶ່ງ, ປີກາຍນີ້ ລູກເຮົາທັງສາມຄົນຫລິ້ນກັບຫມູ່ເຂົາຢູ່ກ້ອງຕະລ່າງນັ້ນ, ນັ້ນເດ, ອ້າຍສີທັນກໍ່

ນັ່ງສານແຫຢູ່ແປະຕັ່ງນີ້, ສ່ວນເຮົາເອງກໍນັ່ງປັ້ນຫລອດຢູ່ຂ້າງກີ່ນັ້ນ. ສຽງເດັກນ້ອຍຝຶດແຊວ ທຳອິດເຮົາກໍບໍ່ໄດ້ໃສ່ໃຈປານໃດ ຄາວຫນຶ່ງໄດ້ຍິນສຽງອີປ້ອກເຮົາຕອນນັ້ນມັນໄດ້ຫົກປີ ໄຫ້ຂຶ້ນແຮງໆ. ເຮົາຕົກໃຈ, ລູກຕີກັນບໍ ? ເຈັບເປັນຫຍັງບໍ ? ພໍແຕ່ສອງປອງລົງໄປເບິ່ງຄັກໆຈຶ່ງຮູ້ວ່າມັນຕັ້ງໃຈໄຫ້ຊື່ໆ ທັງໄຫ້ທັງຈົ່ມທັງດ່າ ໂອຕັ້ງແມ່ນຄືສຽງໄຫ້ສຽງຈົ່ມດ່າອ້າຍທັນ ຂອງເຮົາອ້ອຍຕ້ອຍ. ເບິ່ງທ່າທີ, ສີຫນ້າບໍ່ຈັກເບະປານໃດ, ກັດແຂ້ວງ້ຳສິບ, ຕີບຕູນ, ຈ້ອນສິ້ນ ຊຸກຂະໂຍງໄປມາ ຕັ້ງລອກເອົາ ທ່າທາງຂອງເຮົາຫມົດກ້ຽງ ຈຶ່ງວ່າຄືບຊ້ຳແຮງຄືແມ່ຢູ່ແລ້ວ. ເຮົາຄວັກໆອ້າຍສີທັນສອງເບິ່ງນຳກັນ.

- ແມ່ບັກຕຸ້ຍ! ເຈົ້າຍັງຊິປ້ອຍແບັບໆຢູ່ຫັ້ນບໍ! ງັບປາກແດ່ ຄັນບໍ່ຢາກຕາຍ, ເຈົ້າບໍ່ໄດ້ແມ່ນໂຕດແມ່ອ້ອຍໄດ໋ - ສຽງມັນເປັນເອະໆ ຄືຄົນເມົາເຫລົ້າແທ້ ມັນຫລູບໂດດຕີບຫູອີປ້ອກສອງສາມບາດ - ປາກກູ ! ກູຢາກກິນ

ກູຊອກກິນ, ກູຢາກຫລີ້ນກູຊອກຫລິ້ນ ຜິດຫົວໃຜ! ມຶງບໍ່ຢາກຕາຍຢ່າມີປາກມີສຽງ!

ອີປ້ອກກໍ່ໄຫ້ດີ້ນເຊົ້າ ຮ້ອງຂຶ້ນ :

- ໂອຍໆ ບ້ານເມືອງເອີຍ ບັກຜີບ້ານີ້ ມັນຕີມັນຂ້າຂ້ອຍ ຊ່ອຍຂ້ອຍແດ່! ຊ່ອຍແດ່! ບັກຂີ້ເມົາມຶງເອີຍ ຮື ! ຮື ! ສ່ວນບັກຕຸ້ຍຜູ້ອ້າຍນັ້ນບໍ່ຄືພໍ່ມັນປານໃດ ອີປ້ອກຊີ້ງວອງກວ່າ, ມັນບອກອ້າຍມັນ :

- ນຸ່ຍໆມື້ນັ້ນອີພໍ່ຍັງເວົ້າຫລາຍກວ່ານັ້ນເດີ. ເພິ່ນວ່າອີສັນດານຊົ່ວມຶງ, ມຶງຢ່າມາສັ່ງສອນກູ ມຶງເກັ່ງຫລາຍໃຫ້ມຶງຫນີ! ຫນີໄປໃສກໍ່ຫນີ, ຫນີ!

- ເອີງ ຮູ້ແລ້ວໆ ເຂົາຍັງພວມຊິເວົ້າຕໍ່ໄປນີ້ເດ. ໂຕກໍ່ຕີໄຫ້ຫມູບແປະເສົາເຮືອນນັ້ນທະແມ. ບາດອີປ້ອກຫມູບໄຫ້ຢູ່, ບັກຕຸ້ຍກໍ່ແລ່ນໄປຫລັງບ້ານ ທັງຮ້ອງຄອບ.

- ຖ້າບຶດຫນຶ່ງເດີ - ຄາວດຽວມັນກໍາໃບໄມ້ມາສອງກໍາ - ນີ້ເດີ ອັນນີ້ແມນໄພ້ອີພໍ່ເນີ.

- ໂອ້ຍ ເພິ່ນນຸ່ງເສື້ອຮອດບໍ່ຄືອີພໍ່ຊໍ້າ - ອີປ້ອກ

ເຊົາໄຫ້ມາຕີອ້າຍ ເຖິງວ່າອ້າຍມັນລື່ນມັນຕັ້ງສອງປີປາຍ

- ນີ້ນັ້ນອີພໍ່ແກ້ກະດູມອອກຫມົດ, ເປືອຍເອິກຢູ່, ແລ້ວເພິ່ນປິດຫມວກດຶກເຂົ້າແຈເຮືອນ - ເອົ້າ ເພິ່ນເຮັດຄືນໃຫມ່ທະແມ ... ເອີ ໄຜ່ນັ້ນເອົາຍັດໄວ້ຖົງໂສ້ງກ່ອນແມ ບັກຕຸ້ຍກໍ່ເຮັດຄືນ້ອງມັນບອກ. ເຮົາກໍ່ຍອມຮັບວ່າ ອີປ້ອກຈື່ດີ, ຫົວໃວກວ່າອ້າຍມັນແທ້ໆ. ສ່ວນອີຫລ້າເຮົາກັບອີແຫລ້ ລູກເອື້ອຍຄໍາ ຄືຊິແມ່ນເອົາຈັດໃຫ້ເປັນລູກສອງຄົນນັ່ງຕອບຫມອບເບິ່ງຢູ່, ບຶດຫນຶ່ງອີປ້ອກຊີ້ຫນ້າເຂົາ.

- ອີຫລ້າ, ອີແຫລ້ ສູກໍ່ຕີໄຫ້ຮືໆ ເຊັດນ້ຳຕາຈັ່ງຊີ້ງແມ. ອີ້ ! ຮອດບໍ່ຮູ້ຫຍັງ ! ຮີບໄປ, ສູໄຫ້ແລ່ນໄປລີ້ຢູ່ກົກເສົາຄືພວກເອື້ອຍນີ້ອີພໍ່ຕີອີແມ່ແທ້ທັ້ນບ່າ ໄປຫລ້າ - ມັນອອຍນ້ອງ, ຮອດຕອນນີ້ ອ້າຍທັນອິດບໍ່ໄດ້ ມົບປາກຫົວຮົ່ງຂຶ້ນຄ່ອຍໆ.

ບັກຕຸ້ຍຮ້າຍນ້ອງຄືນ.

- ອີປ້ອກມີແຕ່ເວົ້າອັນອື່ນຢູ່, ໄຫ້ທະແມ ! ອັນນີ້ແມ່ນແກ້ວເຫລົ້າ - ມັນຈັບທ່ອນໄມ້ທໍ່ແຂນຂຶ້ນທອບໃສ່

ເອິກ - ມີແຕ່ນາງສຸລານີ້ແລ້ວ ມັນດີນຳກູ, ພວກສູມັນຊິວຫມິດ ອິວະໆ ອິວະໆ !

- ນາງສຸລາແມ່ນຫຍັງ ? ອີປ້ອກເງີຍຂຶ້ນຖາມ.

- ຈັກແຫລ້ວ, ອີພໍ່ຫາກເວົ້າແນວນັ້ນ, ເພິ່ນວ່າແກ້ວເຫລົ້ານີ້ບໍ່ເປັນນາງສຸລາ - ແລ້ວມັນກໍ່ ຕີຮາກ, ຍ່າງເຊຊັດເຊຊວນລົ້ມລົງ, ລຸກຂຶ້ນ. ເອົາທ່ອນໄມ້ຟາດໃສ່ຫລັງອີປ້ອກ - ມຶງຍັງບໍ່ທັນຫນີຫວະ ! ມຶງຍັງມາໄຫ້ເອົາຫຍັງຢູ່ນີ້ !

- ໂອຍບັກຕຸ້ຍ ຕີເອົາແຮງແທ້. ເຮັດຕົວະຊື່ໆກໍ່ຕີແທ້ຫວະ ?

- ຕີລະບໍ, ນີ້ນັ້ນອີພໍ່ກໍ່ຕີອີແມ່ແຮງແທ້. ໂຕບໍ່ເຫັນບໍ ? ຄັນຕີຄ່ອຍມັນກໍ່ບໍ່ຄືຕວ່າ.

- ອັນນີ້ເຮົາບໍ່ແມ່ນອີພໍ່ອີແມ່ແທ້ ໂຕກໍ່ຕີຄ່ອຍໆຕັ້ງຕີເອົາລະບໍ !

- ຕີແຮງໂລດນ່າ ມັນຈຶ່ງຄື.

- ອື ! ຄັນຊັ້ນເອົາເຊົາຫລິ້ນແລ້ວລະ - ມັນຂູ່ອ້າຍ.

- ເຊົາກໍ່ເຊົາ.

ອີປ້ອກຢ້ານອ້າຍເຊົາແທ້ມັນຫາທາງໃໝ່

- ເອີ ຄັນຊັ້ນໂຕຕີເອົາຫໍ່ນັ້ນແລ້ວພໍດີແລ້ວ ຮອດທີເອົາເຮັດອີແມ່ແລ່ນໜີໄປເຮືອນປ້າສີນ ຄືນີ້ນັ້ນ.

- ແລ້ວແມ່ນໃຜຊິເປັນປ້າສີນໃຫ້ຊັ້ນນາ.

ບັກຕຸ້ຍຫລຽວພຸ້ນຫລຽວພີ້, ໄປຊີ້ໃສ່ອີແດງ ລູກອາແສງ.

- ຊວນອີແດງຫລິ້ນນຳນໍ້, ແລ້ວໃຫ້ມັນເປັນປ້າສີນ

- ແດງ ມານີ້ ຫລິ້ນນຳພວກເຮົາບໍ, ມ່ວນເດີ, ພວກເຮົາຊິໃຫ້ໂຕເປັນປ້າສີນ.

- ເຮົາບໍ່ຮູ້ຫລິ້ນແບບພວກໂຕ. ເຫັນອີແດງຢຸດຢຸດຢ່ອນໆຢູ່ ອີປ້ອກຍົວະ.

- ແລ້ວພວກເຮົາຊິບອກເຮັດ. ມ່ວນໆໄດ.

- ເອີ ຫລິ້ນກໍ່ຫລິ້ນ

ອີປ້ອກບອກ :

- ໃຫ້ໂຕໄປຢູ່ແປະຮົ້ວພຸ້ນ ແລ້ວເຮົາຊິຮ້ອງໄຫ້

ແລ່ນໄປຫາ, ເຫັນເຮົາໄປຮອດແລ້ວ ໂຕກໍ່ຟ້າວຖາມວ່າ ເປັນຫຍັງແມ່ຕຸ້ຍ! ແລ້ວໂຕກໍ່ຍົວະເຮົາຄືນມາ, ຍົວະວ່າ ແນວໃດກໍ່ໄດ້ເດີ.

ອີ່ແດງງຶກໆຫົວ ແລ່ນໄປແຄມຮົ້ວພຸ່ມ ແລ້ວອີ່ປ້ອກ ກໍ່ຕີໄຫ້ແລ່ນກະຍອກກະໂຍງທີບຕີນ. ດ່າສັບພະປີຈັ່ງ ແມ່ນມັນເຮັດຄືຫມົດຂູ່ອັນ ແລ້ວມັນກໍ່ໄຫ້ແລ່ນໄປຫາ ອີ່ແດງຢູ່ພຸ່ມທັງສິບກໍ່ຮ້ອງກາກໆ :

- ຊາດຊົ່ວມຶງເອີຍ, ປານໃດມຶງຊິຕາຍຫວິດຕາກູ ... ໂອຍ! ປ້າສົມເອີຍ ຊ່ວຍຂ້ອຍແດ່ ຂ້ອຍຊິ ຕາຍແລ້ວ, ເຈັບເດ ເບິ່ງບູມຫມົດໂຕແລ້ວ! ໂຕກະຖາມອີກທະແມ່ວ່າ ເປັນຫຍັງ ແມ່ຕຸ້ຍເອີຍ ພໍ່ບັກຕຸ້ຍຕີເຈົ້າບໍ່ຊຸ້ນບໍ່.

ອີ່ແດງກໍ່ວ່າ :

- ເປັນຫຍັງແມ່ຕຸ້ຍເອີຍ ...

- ບັກຜີບ້ານັ້ນແລ້ວ, ມັນບ້າເຫລົ້າ ມັນຊິຂ້າຂ້ອຍ ! ຣີງ ... ປ້າໄປເວົ້າມັນເບິ່ງແມ ຕາແດງເຈືອດໆຄືຜີເຂົ້າ. ມັນຊິຂ້າຮອດລູກຮອດເຕົ້າຂ້ອຍ ... ຢູ່ນໍາມັນບໍ່ໄດ້ດອກປ້າເອີຍ

24/VII
ຫ້າມຈຳໜ່າຍ

ຮື້ໆ. ເຫັນອີ່ແດງເຊີ້ເວີ້ຢູ່ ມັນກໍ່ບອກວ່າ - ໂຕກໍ່ເວົ້າວ່າ ໄປຄືນໄປກ່ອນ ປ້າຈະໄປຮ້າຍຊ່ວຍ ມັນເປັນແນວໃດ ຄືເອົາເລື້ອຍໆແທ້ - ອີ່ແດງກໍ່ເວົ້າໄປຕາມຄວາມ ມັນຄືເຄືອງຈັກນີ້ແລ້ວ. ສ່ວນອີ່ປ້ອກ ກໍ່ຕີຝຶດຟາດຖຽງ ມານໍາທາງ - ມັນບໍ່ເຊົາດອກປ້າ, ຜີໂຕເກົ່ານັ້ນແລ້ວ, ມັນຊິ່ວຄືສັດນີ້ ຮື້ ໆ.

ບາດມາຮອດບັກຕຸ້ຍແລ້ວ ອີ່ປ້ອກຜັດກັບມາບອກ ອີ່ແດງອີກ.

- ອາວທັນເອີຍ, ເຈົ້ານີ້ກໍ່ໂພດແລ້ວຕີ້, ປານໃດ ເຈົ້າຈັ່ງຊິປະສັບດານຕີລູກຕີເມຍ ກິນເຫລົ້າເມົາຢານີ້ ໃຫ້ບ້ານເມືອງເວົ້າຫລາຍເທື່ອຫລາຍ ກໍ່ຮູ້ອາຍເຂົາ ແດ່ຕີ້ - ເມື່ອອີ່ແດງເວົ້າສຸດແລ້ວ ບັກຕຸ້ຍຜັດລືມ ຄວາມພໍ່ມັນຕອບເບິ່ງຊິງທັ້ນ, ມັນຈຶ່ງງອາກມາຖາມອີ່ ປ້ອກອີກ :

- ປ້ອກໆ ມື້ນັ້ນອີ່ພໍ່ຖຽງປ້າສິນວ່າແນວໃດ ?

- ຈັ່ງແມ່ນບໍ່ຈື່ອີຫຍັງ ! ເພິ່ນກໍ່ຮ້າຍວ່າ, ຂ້ອຍບໍ່

ໄດ້ເມົາ ມັນຕັ້ງຊື່ວນຳລຶບປາກບອນ, ລຶບຈອງຫອງ, ດີລະແມ ຂ້ອຍຍັງຈື່ງປາກຈິ່ງແຂ້ວໄວ້ໃຫ້ມັນຫຍ້ຳເອົາ - ບັກຕຸ້ຍ ກໍ່ກັບມາທ່າທີຄືພໍ່ມັນ ແລ້ວເວົ້າຕາມອີປ້ອກບອກ.

- ບໍ່ແມ່ນດອກ, ປ້າ ! ຮື້ໆ ... ອີປ້ອກສະແດງ ອີກ - ຊື່ວນຳຫົວມັນຫັ້ນ ມັນໄປຫລິ້ນໄພ້ງັນກຳເອົາ ບາດເສຍເງິນແລ້ວ ມັນກໍ່ໄປກິນເຫລົ້າ ກິນແລ້ວມັນ ກໍ່ເປັນຜີໂຕເກົ່ານັ້ນແລ້ວ ຮື້ ໆ... ຕາມັນບອດ, ມັນບໍ່ ມືນເບິ່ງໄທບ້ານໄທເມືອງເພິ່ນ ... ໂອຍຈັ່ງແມ່ນກູນີ້ ມີເວນມີກຳນໍ, ບາດລູກຜົວຜູ້ອື່ນຄືວາ ຈິບວາດີຫມົດ ...

- ເຈົ້າວາຂ້ອຍບໍ່ດີຫວະ, ຜູ້ໃດດີຮີບໄປຢູ່ນຳ ເອົາ ! - ບັກຕຸ້ຍທຳທາຂຶງຂັງຈົ໋ກ້ຳປັ້ນ.

- ແດງໆ ໂຕກໍ່ເວົ້າທະແມ - ອີປ້ອກປຶງປັງຂຶ້ນ ສູ້ອີກ - ກູບໍ່ໄປໃສ ! ເຮືອນກູຢູ່ນີ້! ໃຜຊື່ວຜູ້ນັ້ນ ແຫລະ ຕ້ອງຫນີ !

- ລະວັງປາກມຶງໄດ໋ ! ບັກຕຸ້ຍຖືກອີແດງຊຸກເຊອອກ.

- ຢ່າຕີກັນ! ມີຫຍັງຈຶ່ງຄ່ອຍວາກັນດີໆ, ເຈົ້າເມົາ

ເຈົ້າໄປນອນສາຕີ້ອາວ.

- ເອີ໋ໆ ໂຕເວົ້າຄືປ້າສິນແທ້ ມື້ນັ້ນໂຕກໍ່ເຫັນຫວະ, ມື້ພໍ່ເຮົາຕີແມ່ເຮົາຫັ້ນ - ອີປ້ອກຍ້ອງອີແດງ.

- ອື, ເຮົາຄຶດເອົາຊື່ໆ.

- ໂຕກໍ່ເວົ້າຕໍ່ທະແມ - ອີປ້ອກບອກມັນອີກ ລູກເຕັມເຮືອນແລ້ວ ອາຍບ້ານອາຍເມືອງແດ່ວ່າແມ

- ລູກເຕັມເຮືອນແລ້ວ ອາຍບ້ານອາຍເມືອງແດ່ - ອີແດງເວົ້າຕາມ ອີປ້ອກບອກຕໍ່ :

- ມີຫຍັງຈຶ່ງຄ່ອຍເວົ້າກັນດີໆ, ຢ່າເຮັດຮ້າຍຄືເກົ່າອີກວ່າແມ - ອີແດງກໍ່ເວົ້າຕາມອີປ້ອກ ໄປເປັນຄວາມເປັນຄວາມ. ເວົ້າໄດ້ຫລາຍເຕີບແລ້ວ.

- ເອີ໋ໆ ມື້ນັ້ນ ພໍ່ກັບແມ່ສູຕີກັນແທ້ຫວະ ? ອີແດງຖາມຂຶ້ນແທ້.

- ກໍ່ຕີແທ້ຫັ້ນແຫລວ, ແນວພໍ່ຂີ້ເມົາ, ບໍ່ຟັງຄວາມໃຜ, ອີແມ່ກໍ່ຮ້າຍເພິ່ນ. ພວກເຮົາຊົ່ວໆ ເພິ່ນກິນເຫລົ້າກັບເພິ່ນມັກຕີຄົນ.

- ຄັນພໍ່ກັບແມ່ສູປະກັບແທ້ ສູຊິໄປນຳໃຜຮື໋ປ໋ອກ ?
ອີ່ແດງຖາມຊື່ໆ.

- ຈັກແຫລ້ວ, ບາງທີເຮົາກໍ່ໄປນຳແມ່, ບາງທີເຮົາກໍ່ໄປຢູ່ນຳແມ່ຕູ້ ... - ຕອບນັ້ນ ສີຫນ້າມັນເປັນຕາອີ່ດູໆ. ອ້າຍທັນບໍ່ປາກຈັກຄວາມ ຄືຊິແມ່ນເພິ່ນຄຶດ. ແຕ່ນັ້ນມາເຮົາເຫັນອ້າຍທັນທຳດີ ກັບເຮົາຕະຫລອດຮອດດຽວນີ້.

# ເດືອນລັບແລ

*ທິດາຈັນ*

ຖ້າຫາກມີເທວະດາຟ້າແຖນອິນພົມແທ້ ເພິ່ນກໍ່ຄົງຈະຄຽດແຄ້ນແທນັ້ນໃຈ ຍ້ອນຄວາມຈິ່ນວ່າ ສາບແສ່ງຢູ່ໃນໃຈຂອງພູວັນ. ນາງບໍ່ແມ່ນປະເພດຄົນທີ່ມັກຖືເອົາຜູ່ບໍ່ມີຮູບຮ່າງເຫລົ່ານັ້ນມາກ່ຽວກັບກັບ ຄະດີຕ່າງໆໃນຊີວິດຂອງຕົນ. ແຕ່ຍ້ອນລີ້ງປາກນຳປາກບ້ານປາກເມືອງເພິ່ນ. ຈົນກະທັ້ງຮອດ ປາກຢູ່ໃນໃຈຂອງນາງ ກໍ່ມັກເອີ່ຍຊື່ຂອງ "ເທວະດາຟ້າແຖນ ອິນພົມ " ເຂົ້າຮ່ວມໃນຈຳນວນຜູ້ເປັນຕົ້ນເຫດດີ, ເຫດຮ້າຍທັງຫລາຍໃນຊີວິດຂອງຕົນ. " ຟ້າ

ແຖນອິນພົມຍົມມະລາດ ... ຊາງໂຫດຮ້າຍ ທຳຍາບ ແຍກສາຍນິ່ງສາຍແນນຜູ້ຂາ !".

"ພໍ່ສັນຕິໄຂ້ !" ແມ່ເພັ້ງຂາວນີ້ຂົນມາຫາຫູພູວັນ ໃຫ້ໄອກວ່າບາດຕີນອັນຣີບຮ້ອນ ທີ່ແມ່ກຳລັງສາວມາ ບໍ່ທັນ ຮອດຕີນຂັ້ນໄດເຮືອນບາງ. ດ້ວຍສີຫນ້າສຸດກັງວົນວິຕົກນຳ ລູກເຂີຍ ຜູ້ແມ່ຮັກປານລູກເກີດກັບຄີງ. ຜູ້ຄົນຫມົດຈຸມ ຮັກແພງນັບຖື ປານຄົນຮ່ວມສາຍເລືອດ ແມ່ທັ່ງລົມ ຫາຍໃຈແຮງໆ ເວົ້າສຽງເບະບຽວ "ມັນເປັນໄຂ້ຈົນໄດ້ນອນ ແນວນັ້ນ ແມ່ນຫນັກສົມຄວນໄດ໋ ອັນຄົນບໍ່ປາກນີ້ນາ, ຣີບໄປເບິ່ງນ້ອງແດ່, ຄັນໄປໂຮງຫມໍກໍ່ບອກເມຍມັນພາກັນ ໄປສາແມ່ວ່ານ່າ, ໄປໄວໆລູກ " ແມ່ເວົ້າຢ້ຳ ເພື່ອຈັດ ໃຈເຢັນຂອງພູວັນ, ຂະນະນັ້ນແມ່ນຶກບໍ່ເຖິງເລີຍວ່າ ພູວັນ ກຳລັງລາລ່ອຍຍອນຖືກບາດແຫ່ງຂອງຂາວທີ່ມີຊື່ "ພໍ່ສັນຕິ" ແລະ "ເປັນໄຂ້" ທີ່ແມ່ນຳມາໃຫ້ລູກສາວກົກ.

"ໄຂ້ຊື່ໆ ບໍ່ພໍເປັນຫຍັງໄວວາຕີບໍ່ ". ພູວັນກິດ

ສຽງໃຫ້ເປັນທຳນອງຂອງຄົນໃຈຍັງທ່ຽງ, ໃຫ້ສະແດງຄວາມເປັນຫ່ວງອອກພໍດ້າມພໍດີ ສຳລັບເອື້ອຍທີ່ວໆໄປທີ່ມີຕໍ່ຜົວນ້ອງສາວ.

" ຢ່າເຮັດໃຈເຢັນໄດ໋ລູກ, ເມຍມັນວ່າບັກອັບນີ້ ເຄີຍເປັນໄຂ້ຊັກໄຂ້ຈັ່ງໄດ໋, ເອີ ທັງເປັນພະຍາດຫົວໃຈອາຍແດ່ກໍ້. ເຈົ້າເປັນແພດເປັນໝໍ ແຮງຊິຮູ້ຮ້ອນໃຈເລື່ອງນີ້ລະບໍ "

ຄຳວ່າ "ເມຍມັນ" ໃນຄຳເວົ້າທຳມະດາຂອງແມ່ ມັນກາຍເປັນແຮງສະດຸດຄຳອຸທານທີ່ຫລໍ່ດ້ວຍຂາງ ສຽບເໜັບຄາໄວ້ ຫລືບໃດຫລືບໜຶ່ງຂອງໃຈພູວັນ ຊຶ່ງນາງເອງກໍ່ບໍ່ຮູ້ທີ່ຂອງມັນແນ່ແທ້. ພຽງແຕ່ຮູ້ສຶກປວດລ້າວຂຶ້ນມາເປັນຮູດໆ ເມື່ອນາງຄຶດພໍ້ມັນ ຫລືມີຜູ້ໄປແຕະຕ້ອງມັນຄືດັ່ງນີ້.

" ພູວາ ນ້ອງຫລ້າຂອງເອື້ອຍ !" ພູວັນຈວາດຕົນເອງດ້ວຍຄວາມຈິງ ນີ້ຄືທຸກໆເທື່ອທີ່ນາງຫລົງວາງຕົນຢູ່ໃນທ່າຂອງຜູ້ຜ່າຍແພ້ຄວາມຮັກຄັ້ງແຮກຂອງນາງ. ເຖິງວ່າການອອດອອຍລູບໄລ້ຂອງນ້ຳໃຈຕະກຸນ ປຸກຄວາມເປັນເຈົ້າການຄຸມສະຕິໄດ້ທັນທີ. ແຕ່ພູວັນ



ກໍ່ຫລີກລ່ຽງຄວາມປອມແປງ ຕົວະຕົ້ນຕົນເອງ ແລະ ຕົວະຕົ້ນທຸກຄົນບໍ່ໄດ້ ຊ່າງເຫາະ, ເພິ່ນຍັງວ່າບໍ່ແມ່ນການຕົວະໃດໆກໍ່ຊົ່ວ ສະເຫມີກັນ, ຕົວະເພື່ອຄົນທັງຫລາຍກໍ່ບໍ່ແມ່ນການປະພຶດບໍ່ດີ.

ມີຜູ້ເວົ້າວ່າ ເພດຍິງມີສັນຊາດຕະຍານຮັກຮຸນແຮງກວ່າຜູ້ຊາຍ ແລະ ພະລັງຄວາມທົນຄຸນສະຕິ ກໍ່ສູງກວ່າເພດຊາຍຫລາຍເທົ່າ, ພູວັນ ຮູ້ສຶກວ່າຄວາມນີ້ ເອົາເວົ້າໄວ້ເພື່ອບົ່ງບອກເຖິງຄວາມຮັກນາງ ຜູ້ດຽວ. ໂອຍ, ໄຟຮັກທີ່ຖືກຂັງ, ພູໄຟອັນມະຫຶມາແສນຮ້ອນລວກ ແລະ ປັ່ນປ່ວນ, ເພື່ອຄວາມສະຫງົບສຸກ, ວຽບງາມຂອງຊີວິດ, ຝາປິດປາກພູໄຟທີ່ຫລອມດ້ວຍທາດຄຸນສົມບັດ, ວັດທະນະທຳ, ຮີດຄອງຊຶ່ງນາງເປັນຜູ້ຖືຝານັ້ນປິດ ແລະ ອົ່ມໃຫ້ມັນຢູ່ໃນທ່າປິດສະເຫມີໆມາ "ບອກບໍ່ທ່ອນຍ້າຍໄປຫາຄວາຍ" "ດອກໄມ້ບໍ່ທ່ອນບິນໄປຕອມແມງພູ່ເຜີ້ງ" ແລະຄຳທີ່ມີລະຕິລ້າຍຄຽງນີ້ ເປັນພະລັງຊ່ວຍນາງກົດຝາໄວ້.

ບໍ່ພຽງແຕ່ຄົນອື່ນບໍ່ຮູ້ວີ່ແວວຂອງພູໄຟຮັກນັ້ນ, ຮອດກະໂຕຜູ້ຖືກນາງຮັກນັ້ນ ກໍ່ຄົງຈະບໍ່ມີເງື່ອນ ທີ່ເປັນພິລຸດໃດແນບອອກມາໃຫ້ສັງໄສເລີຍ. ຊາງເທາະ ! ຊາຕາຊີວິດໄດ້ຈັດຊ້ອນໄປແນວນັ້ນແລ້ວເດ ! ປະຕິບັດຕາມຄຳສັ່ງຂອງເທດຜົນຊີວິດຈິງດີກວ່າຫຍັງທັງຫມົດ ! ທຸກຢ່າງຕ້ອງປະພຶດຕົວຄືກັບວ່າຕົນ ແລະນ້ອງເຂີຍບໍ່ເຄີຍມີເລື່ອງຫຍັງກ່ຽວກັບກັນມາກ່ອນຈັກເທື່ອກໍ່ແລ້ວກັນ !

ແຕ່ພູວັນຫລອກລວງຕົນເອງໄດ້ພຽງເພື່ອຄວາມດີໃນສາຍຕາຂອງຄົນອື່ນເທົ່ານັ້ນ. ນາງບໍ່ຮູ້ວ່າ ເວທະກຳໃນຫົວໃຈຄົນມັນມັກຈະເປັນຄວາມຂັດແຍ່ງ ກັບເທດຜົນຊີວິດ ຊຶ່ງຕົວນາງເອງຕ້ອງໄດ້ທໍລະມານຕົນ ຢູ່ທ່າມກາງສະຫນາມຮົບ ອັນບໍ່ມີມື້ຈົບສິ້ນໃນຕະຫລອດຊີວິດຂອງນາງ.

ຊີຫນ້ອຍຫຍັງ, ກໍ່ສິບກວ່າປີມາແລ້ວ, ທີ່ນາງກັບເພດເປັນເມຍຜູ້ແສນດີຂອງ ສຸລິຄອນສັກ ນາງເຄີຍ

ຄິດໃຫ້ຕົນເອງວ່າ ເອື້ອິດເອົາ, ແລ້ວຄົນໄປອັນໃດມັນກໍຈະ ຄ່ອຍເປັນອັນນັ້ນ, ເຮົາຈະລືງກັບຄວາມເປັນເອື້ອຍເອົາ ຈົນເຖິງອັ້ນ ນ້ອງເຂີຍກໍ່ເປັນພຽງນ້ອງເຂີຍທໍາມະດາໄປເອງ ແລະ ເຮົາຈະສະບາຍໃຈໄປເອງ. ແຕ່ນາຮອດມື້ນີ້, ຫາງຈາກນັ້ນດົນປານນີ້, ໄດ້ຍິນຂ່າວນີ້ ສິ່ງທີ່ນາງບໍ່ຢາກຄິດ ມັນກໍ່ຮູ້ສຶກຂຶ້ນມາເອງ : " ພິງເພັດ ຂໍຢ່າໃຫ້ອາຍເປັນຫຍັງ ໄປເທາະ, ຖ້າອ້າຍຫາກ ... " ນາງບໍ່ກ້າຄິດຫຍັງໄປເກີນນີ້. ປ່ອຍໃຫ້ອາລົມມັນສັບສົນຄືນເລກັນໄປດ້ວຍຄວາມຮ້ອນຮົນ, ສົງສານ ແລະ ດີໃຈຂອງຜູ້ເປັນເອື້ອຍ ແລະຜູ້ເປັນ ຫນີ້ຫົວໃຈຕົນເອງ ນາງຍ່າງໄປຫາເຮືອນນ້ອງສາວຄືງຜູ້ຊື່ ແມ່ສັນຕິ ຊຶ່ງບໍ່ຫ່າງໄປຈາກເຮືອນຕົນເອງພໍສອງຊົ່ວເອີ້ນ.

ຜູ້ນ້ອງສາວຍ່າງອອກຫນ້າ ທັງຈົ່ມທ່ອງນໍາອາການ ເຈັບຂອງຜົວ ຢ່າງທັນໃຈນ້ອຍໃຈໃຫຍ່ ເພື່ອຂໍຄວາມອີດູ ນ້ອງເຂີຍຈາກເອື້ອຍ ທີ່ເພິ່ງທີ່ນາງໄວ້ໃຈກວ່າໃຜໆ. ນາງບໍ່ຮູ້ເລີຍວ່າ ເອື້ອຍກໍາລັງງຶ້ງຮຽງ, ຢາກປະຕິເສດ

ການເອົາຕີນເຂົ້າໃກ້ຊິດນ້ອງເຂີຍ, ເອື້ອຍຢາກຫລີກການປະເຊີນໜ້າ ທີ່ຕ້ອງສະແດງລະຄອນ ຊ້ຳແລ້ວຊ້ຳເລົ່າ ແລະລະຄອນສາກນີ້ ນາງສຳນຶກໄດ້ ຕີນຈະສວມບົດບາດຂອງຜູ້ເປັນທ່ານໜໍຜູ້ທຸ່ນທ່ຽງ ແລະຊຳນານ ທັງເປັນເອື້ອຍໃຫຍ່ໃນຄອບຄົວ ຜູ້ມີສິດຄຸ້ມຄອງ ຄວາມສຸກທຸກ, ເປັນຕາຍຂອງຄົນໃນຄອບຄົວ. ພໍແຕ່ ນາງເຫັນເຮືອນ, ຮູບຮ່າງ ພິງເພັດກໍປະກົດອອກປະຕູມາ ທັງໆທີ່ປະຕູປິດຢູ່, ເຂົາຍ່ວງບາດຕີນເບົາໆລົງຂັ້ນໄດ, ຕາເຂົາບໍ່ສະແດງອາລົມຫຍັງໝົດ, ມີທັງສອງໂຈມທີບຈະຕຸລັດສີດຳທີ່ບໍ່ມີບ່ອນປິດເປີດ, ພູວັນຮູ້ທັນທີວ່າ ໃນທີບມີວັດຖຸເວລາເຂົາຍື່ນທີບນັ້ນໃຫ້ພູວັນ ທັງກ່າວນອບດ້ວຍສຳນວນທີ່ໄຮ້ສຽງວ່າ : "ນີ້ຄືສິ່ງດຽວທີ່ພວກເຮົາມີໄວ້ນຳກັນ, ນ້ອງຈົ່ງຮັບເອົາມັນໄປ ຈະເອົາໄປໃສ່ກໍເອົາໄປສາ, ເອື້ອຍ !" ພູວັນທຳທ່າບໍ່ສົນໃຈຫຍັງ ນາງພະຍາຍາມຖືເປັນເລື່ອງ ທີ່ບໍ່ເປັນໜ້າສົນໃຈຂອງຜູ້ທີ່ຖານະຕ່ຳກວ່າຕົນ, ນາງຟ້າວໄປເຮັດໜ້າທີ່, ປານນີ້ຄົນເຈັບທັງເປັນນ້ອງເຂີຍ

ຂອງນາງ ຄົງຈະກຳລັງລໍຄອຍນາງຢູ່, ເຂົາຄົງຈ້ອງ ຕາສີແດງທີ່ບັນຈຸດ້ວຍພິດໄຂ້ຢູ່ກັບປະຕູເຮືອນ, ລໍຄອຍການ ປະກົດຕົວຂອງເຮົາ, ເອີ້ ກໍ່ມີມື້ທີ່ນ້ອງຍັງເປັນຜູ້ທີ່ອ້າຍ ຕ້ອງສິນໃຈອີກນໍ, ນ້ອງຄິດວ່າທຸກຢ່າງຄົງຈະຄືຖ່ານໄຟ ຈີ່ມນໍ້າໄປແຕ່ດົນແລ້ວ ...

ຮອດເຮືອນ ນ້ອງສາວມ້ວນຜ້າກັ້ງ, ມ້ອນມຸ້ງຂຶ້ນ, ກົງກັນຂ້າມກັບສິ່ງທີ່ພູວັນຄາດຄິດ ຜັດແມ່ນ ຜ້າຫົ່ມນອນ ສອງຜືນຄຸມຕົວເຂົາໄວ້ຈົນເລັ່ງຕຶ້ງ, ນາງຫວັງວ່າຄຳວ່າ "ເອື້ອຍພູວັນມາເບິ່ງອ້າຍ" ຂອງນ້ອງສາວຈະເຮັດ ໃຫ້ຜ້າຫົ່ມທັງສອງ ຟື້ງສະເດັນອອກຢ່າງໄວວາ, ແຕ່ແລ້ວ ຜ້າຫົ່ມຊໍ້າຜັດພໍແຕ່ຕິງຄ່ອຍໆ ພໍບົ່ງບອກວ່າຢູ່ໃຕ້ມັນ ຍັງມີສິ່ງທີ່ມີຊີວິດ, ນ້ອງສາວໃຊ້ມືຂອງຜູ້ມີສິດ ຍົບຮົນ ຜ້າຫົ່ມອອກຈາກໜ້າຜົວ ແລະ ລູບໜ້າຜາກແຮງໆ ທັງຫລຽວມາເວົ້າກັບເອື້ອຍ : " ໂອຍແຮງຮ້ອນກວ່າເກົ່າ, ເອື້ອຍລອງຄຳເບິ່ງຊ່ວຍນ້ອງແດ່ແມ ! " ທັນໃດໜັງອື້ງມື

ຂອງທ່ານໝໍ ປົ່ງຂຶ້ນອີກຊັ້ນໜຶ່ງ, ໜັງໜາ ແລະ ນິ່ມນານ. ທ່ານໝໍບໍ່ກ້າຈະໃຊ້ຝ່າມືຂອງຕົນເຮັດໜ້າທີ່ເທື່ອ, ນາງຈຶ່ງເອົາປາຫລອດ ອອກຈາກຖົງເສື້ອມາຟົດ ແລະ ປ່ອຍຄຳເວົ້າໄປຕາມບົດບາດທ່ານໝໍ " ໃສ່ຂໍແທກອຸບທະພູມເບິ່ງກ່ອນດູ ". ນາງແຫຍປາຫລອດເຂົ້າກ້ອງວົງແຂນອັນລຳສັນ ທີ່ນາງເຄີຍໄດ້ມີມື້ຝັນເອົາຕົວເຂົ້າໄປຢູ່ໃນວົງນັ້ນ ແລະ ຈຶ່ງເອົາເຄື່ອງຟັງຫົວໃຈຈາກຖົງອອກມາສຸບໃສ່ຫູແລ້ວແປະໃສ່ຊວງເອິກຂອງ ຄົນໄຂ້, ວິນາທີນັ້ນ ທ່ານກາງສຽງອຶກກະທຶກຂອງຫົວໃຈ, ຂອງລົມຫຼວເຂົ້າອອກໃນປອດ ແລະ ສຽງຫຍັງຕໍ່ຫຍັງ ເຮັດໃຫ້ນາງຈຳແນກໄດ້ຍາກເພາະນາງສຳຫລວດຄົນໄຂ້ ບໍ່ພຽງແຕ່ກາຍຊີວິດເຂົາ, ແຕ່ມັນປົນເປທັງການສຳຫລວດພາວະຂອງຈິດໃຈເຂົາທີ່ມີຕໍ່ນາງ ນັບແຕ່ມື້ນາງ ແລະ ເຂົາເລີ່ມສາລະພາບຮັກຕໍ່ກັນ ຄາວໄປລຳລຽງຮ່ວມໜ່ວຍກັນ ແຕ່ມື້ຮຽນອຸດົມປີທ້າຍຮ່ວມຫ້ອງດຽວກັນ ຈົນມາເຖິງດຽວນີ້ ມັນເປັນແນວໃດ ? ນາງບໍ່ແມ່ນຢາກຮູ້ເພື່ອນ້າງລະບົບການ

ຈັດຊ້ອນຊີວິດ ຂອງຊາຕາຜ່ານມາດອກ. ແຕ່ຄວາມເລິກລັບຂອງຫົວໃຈຄົນ ມັນຫາກມັກສຳຫລວດທີ່ນັ້ນເອງ. ພູວັນຍ້າຍບ່ອນຟັງຊ້າໆ ປະສາຍຕາໄວ້ໜ້າຜາກພຽງໆຂາວໆ ມັນມີເຝືອຍຜົມສີດຳເປັນລອນ ເປີ້ຍໄປອ້າງຊ້າຍ ຊຶ່ງນາງເຄີຍລັກແຍງຫາງຈາກນີ້ ສິບກ່ວາປີມາແລ້ວ. ຮີມຕາເທີບໆອ່ອນແອບໍ່ຍອມໄຂອອກ, ເຮັດໃຫ້ພູວັນລັກຄຽດ. ນາງວາງກ້ອງຟັງໄວ້ ແລ້ວໃຊ້ມືຜີມັນຂຶ້ນຢ່າງກາຫານເຕັມສິດ.

" ໂອ້ ຂາດເລືອດຫລາຍແລ້ວໄດ່ພູວາ " ນາງເວົ້າກັບນ້ອງສາວ ແລ້ວອອກຄຳສັ່ງໃຫ້ຄົນໄຂ້ອ້າປາກຂຶ້ນເພື່ອຂັບໄລ່ຄວາມສຳນຶກເຖິງຄຳເວົ້າ ທີ່ເຄີຍຫລຸດອອກຈາກຮີມປາກບາງໆ ຄືປາກແມ່ຍິງຂອງເຂົາທີ່ວ່າ : " ພູວັນ ... ອ້າຍຮັກນ້ອງ ອ້າຍຮັກນ້ອງພຽງຄົນດຽວໃນຊີວິດນີ້ ... "

ນາງຫັງເວົ້າດັ່ງໆກັບນ້ອງສາວວ່າ :

" ຮູຄໍດີໆຢູ່ ບໍ່ມີຫຍັງຜິດປົກກະຕິ. ນ້ອງໄປເອົາແຜຈຸ່ມນ້ຳມາເປີໃສ່ໜ້າຜາກລາວໄປ່, ຊາມຊາກຮົມໄປ

ໂຮງໜໍ "

ສ່ວນໃຈຂອງນາງຊໍ້າຜັດຄຶດຢູ່ວ່າ : " ຮື ອ້າຍ ບຸນທອງ ອ້າຍຮັກສາຄຸນສົມບັດແຂງກັບນ້ອງບໍ ? ຫລືຫົວໃຈ ອ້າຍມັນຫາກເປັນຢ່າງໄປນໍາຄວາມຍາວຂອງເວລາເອງ. ? ບໍ່ມີມື້ດອກ ຜູ້ຍິງຄືນ້ອງຈະປະລາໄຊໃຫ້ຫົວໃຈຂອງຕົນເອງ ຫລື ຈະປະລາໄຊໃຫ້ສິ່ງທີ່ບໍ່ຄວນປະພຶດ. ອ້າຍຢາກຖ້າເບິ່ງ ນ້ອງກໍ່ໄດ້ ! "

ຮອດມື້ນີ້ ພູອັບກັບຄວາມເຕີບໃຫຍ່ຂອງຊີວິດ ນາງເຮັດໃຫ້ນາງຮູ້ດີວ່າ ນາງກໍາລັງຕົກຢູ່ທ່າມກາງການ ຕໍ່ສູ້ລະຫວ່າງຈິດຕະສາດຂອງຄວາມຮັກ ກັບເຫດຜົນ ຊີວິດຂອງສັງຄົມ - ນາງພະຍາຍາມເອົາເຫດຜົນຊີວິດ ບວກກັບຄວາມຄຽດແຄ້ນໃຫ້ຕົນເອງ ທີ່ທໍາມະດາຕ້ອງ ເປັນຝ່າຍຖືກຮັກ. ແຕ່ຕົນຊໍ້າຜັດຖືກຄົນຮັກເຊົາຮັກ ໄດ້ເປັນກໍາລັງແຮງ ເພື່ອຕ້ານກັບຄວາມອອນໄຫວເພາະຮັກ ແລະ ຮອດດຽວນີ້ ນາງກໍ່ຢູ່ໃນທ່າຜູ້ມີໄຊ ແລະ ນາງຈະມີໄຊ ຕະຫລອດຊີວິດ. " ຮື! ອ້າຍບຸນທອງ ຫົວໃຈຂອງຂ້ອຍມັນ

ຈະຍັງເປັນແນວໃດກໍ່ຢ່າ ຂ້ອຍຈະເຮັດໃຫ້ເຈົ້າຮູ້ວ່າ ໃຈຮັກຂອງຂ້ອຍທີ່ເຄີຍມີຕໍ່ເຈົ້ານັ້ນ ມັນບໍ່ມີແລ້ວ, ມັນເຢັນຢ່າງກ່ວາຫົວໃຈເຈົ້າໄປອີກພຸ້ນແລ້ວ "

" ພູວາ ນ້ອງເອົາລາວໄປໂຮງຫມໍດຽວນີ້, ເອື້ອຍຈະເອົາອີນ້ອຍຖ້າ "

" ໂອ້ຍ ຢ່າວ່າເຫາະເອື້ອຍ, ລູກນ້ອງມັກແອວມັນບໍ່ຢູ່ນຳໃຜ, ອີກຫນຶ່ງ ມື້ນີ້ກໍວັນພັກ, ເອື້ອຍກໍເປັນແພດເປັນຫມໍ ເອື້ອຍເອົາໄປເວົ້ານຳທ່ານຫມໍ ຢູ່ສຸກເສີນກໍຊິງ່າຍກວ່ານ້ອງ."

" ຖ້າວ່າແພດຫຍັງ, ໃຜໄປ ເອົາກໍ່ຮັບໃຊ້ດີຄືກັນ, ດຽວນີ້ເອື້ອຍຍັງຄາບໍ່ໄດ້ຄອບອ້າຍສັກຂອງເອື້ອຍ ລາວໄປຫາປານາ. ລາວກໍຊິເມື່ອຍແລ້ວ, ຍັງຊິໃຫ້ລາວງົມແຕ່ງກິນເອງ ກໍ່ອີດູລາວແດ່ "

ນ້ອງສາວບໍ່ຮູ້ຄວາມຫມາຍຂອງເອື້ອຍ. ຄິດຄຽດຈຶ່ງເວົ້າດັນຂຶ້ນ :

- ອີດູກໍ່ອີດູເທາະ ອັນໜຶ່ງລະຄົນບໍ່ເຈັບບໍ່ໄຂ້ຫຍັງ, ອີ່ແມ່ກໍ່ຢູ່ທັ້ນທັງຄົນ, ບາດຜູ້ເຈັບຜູ້ໄຂ້ນີ້ເດ ເຈົ້າຊິບໍ່ອີດູແດ່ບໍ ? ສຽງພູວາເບະປ້ຽວ. ຢ່າເທາະໃຜບໍ່ຢາກເບິ່ງຢາກແຍງກໍ່ຊິເບິ່ງເອົາເອງດອກ. ຄັນເປັນຫຍັງກໍ່ຊິເປັນເອງດອກ.

ພູວັນ ອີດູຕົນນ້ອງສາວ, ທັງຄຶດຢາກຫົວຂວັນມັນ

- ເອີ່, ຄັນຊັ້ນໄປກໍ່ໄປ, ໄປນຳກັນທັງສາມຄົນເຮົານີ້

- ຄັນໄປໝົດທັງສາມຊິຈ້າງລົດຫຍັງ, ລົດແທກຊີທາງນີ້ກໍ່ບໍ່ມີ, ມີແຕ່ສາມລໍ້ຖີບ, ນັ່ງໄດ້ສອງຄົນ, ຄັນເອື້ອຍບໍ່ຢາກໄປ, ນ້ອງຫາກຊິໄປເອງດອກ. ບອກອີ່ແມ່ມາເຝົ້າເຮືອນໃຫ້ແດ່.

ພູວັນບໍ່ຕອບຫຍັງ ລົງໄປລັດສາມລໍ້ມາແລ້ວສັ່ງໃຫ້ນ້ອງສາວຈັດເຄື່ອງນອນໂຮງໝໍຂຶ້ນລົດ. ແລ້ວທັນມາເວົ້າກັບພົງເພັດ

" ອີດລຸກໄປຫາລົດໄດ້ບໍ່ນ້າເອີຍ ?

ຜ້າຫົ່ມຕິງຄ່ອຍໆ ແລະ ມີສຽງຄາງປົນກັບຄວາມເວົ້າເຄືອໆ ລອດອອກມາ.

"ນ້າເຂີຍເວົ້າຫຍັງ ?" ພູວັນຫັນມາຖາມນ້ອງສາວ.

"ຊິແມ່ນລາວຍັງເຈັບຫົວຫລາຍໄດ໋ເອື້ອຍ. ນ້ອງຫາເອື້ອຍເອົາຢາຂີ້ເຜີ້ງຢູ່ກ້ອງຫມອນທາໃຫ້ລາວແດ່"

ພູວັນຈັບຢາຂີ້ເຜີ້ງຂຶ້ນມາ, ນີ້ສັ່ນໆໄຄແຕ່ຄຶດພໍ້ທາງອອກໃຫ້ຕົນເອງໄວ

"ພູວາເອື້ອຍວ່າ ຮີບເອົາລາວລົງໄປສາ ສານລໍ້ຈະຖາດົນໄດ໋."

"ຮືໆ ຫນາວ" ສຽງຄົນໄຂ້ຄາງ.

"ພູວາເອົາຖົງຕີນມາໃສ່ໃຫ້ລາວກ່ອນ "

ນ້ອງສາວ ຍື່ນຖົງຕີນມາໃຫ້ເອື້ອຍ

"ໃສ່ຊ່ວຍນ້ອງແດ່, ລູກນີ້ກໍ່ວາງມືບໍ່ໄດ້"

ພູວັນ ພະຍາຍາມປັດປ່າຍທຸກຄວາມຮູ້ສຶກອອກຈາກຝາມື ທັງສຸບຖົງຕີນເຂົ້າຕີນແຕ່ລະເບື້ອງຂອງພິງເພັດປານສຸບໃສ່ກະຕໍໄມ້ ແລ້ວເປີດຜ້າອອກສັ່ງ

" ເອົາລຸກຂຶ້ນ "

ຄົນໄຂ້ຄ່ອຍລຸກຂຶ້ນທັງສັ່ນເຊັນ, ພໍແຕ່ຕັ້ງໂຕຂຶ້ນໄດ້ ເອົາກໍ່ເຊຫາວລົງອີກ. ພູວາຮ້ອງຂຶ້ນ

" ເອື້ອຍກໍ່ດາຍ, ໂຊມເອົາລາວແດ່ແມ, ມານອງວາງລູກກ່ອນ, ເຜື່ອເອົາຄົນລະຂ້າງເນາະ "

ພູວັນເຮັດຕາມນ້ອງຄືກັນຈັກ.

ສາມລໍ້ປະກົດວ່ານ້ອຍແສນນ້ອຍ, ພູວັນນັ່ງຫລອບລົງ ບໍ່ໃຫ້ແນບພົງເຜັດຈົນເກີນໄປ, ແຕ່ສອງກົ້ນບອກກັບ ຜ້າຫົ່ມນວມຕູມລົງພົງເຜັດ ເຮັດໃຫ້ເນື້ອທີ່ຕັ້ງບໍ່ເຫລືອ ພໍເຊັນ, ສາມລໍ້ເດີນ, ສຽງຄາງພົ້ນອອກມາຄ່ອຍໆ ຕາມຈັງ ຫວະເຕັ້ນຂອງຕີນລົດ, ຫົວພົງເຜັດເຕື່ອຍລົງຊູນກັບ ບ້ວເຫລັກລົດ ພູວັນກັ້ນໃຈ ກອດຜ້າຫົ່ມເຊິ່ງຄໍຊູຂຶ້ນໃຫ້ຫ່ຽງ. ເອົາຫລັບຕາຄືປ່ອຍປະຄວາມຮັບຜິດຊອບຕໍ່ຮ່າງກາຍ ເອົາໄວ້ກັບພູວັນ. ນີ້ເປັນສິດຂອງຄົນເຈັບທຸກຄົນ, ເອົາບໍ່ຄິດຫຍັງດອກ, ຜົວຂອງເຮົາຫນ້າຮັກກວ່າເອົາ

ຫລາຍເທົ່າ, ເຂົາຮັກ ແລະ ເອົາໃຈເຮົາກວ່າໃຜໆໃນໂລກ. ຮື ! ຖ້າເບິ່ງໂລດ ອ້າຍພົງເພັດ ໃຜຈະຮັກຜົວຮັກເມຍຂອງຕົນກວ່າກັນ, ໃຜຈະລືມຮັກເກົ່າໄດ້ດີກວ່າກັນ !

ຮອດໂຮງຫມໍເມືອງ, ພູວັນ ພາຍກະເປົາເຄື່ອງໂດດລົງສາມລໍ້ແລ້ວໂຊມເອົາຄົນເຈັບລົງ, ບາງໃຊ້ແຂນສອງເບື້ອງຂອງນາງແພດ ໂຊມເອົາສອງຂີ້ແຮ້ຄົນເຈັບກ້າວໄປຊ້າໆ ຈົນຮອດທີ່ນອນ ແລ້ວມອບຄົນເຈັບໃຫ້ແພດທັງຫລາຍ.

ສຸດທໍ່ນີ້ !

ເກີນນີ້ຈະບໍ່ມີເທື່ອໃດ ທີ່ເຮົາໄດ້ມີໂອກາດໃກ້ຊິດເຂົາຄືແນວນີ້ ເພື່ອຊອກຫາຄຳຕອບໃດຫນຶ່ງ ຈາກທ່າທີ, ຈາກຄຳເວົ້າ ... ແລະ ນີ້ກໍ່ໄດ້ຄຳຕອບແລ້ວ ! ຄື ເຂົາເສີຍເມີຍ, ເຂົາບໍ່ຄິດຫຍັງກ່ຽວກັບ ຄວາມຫລັງຂອງເຮົາກັບເຂົາແມ້ແຕ່ໄຍດຽວ. ເຂົາໂຫດຮ້າຍ, ເຂົາໃຈດຳ, ເຂົາມາເປັນນ້ອງເຂີຍເຮົາເຮັດຫຍັງ, ເປັນຫຍັງເຂົາຈຶ່ງ

ມາທໍລະມານໃຈເຮົາຢູ່ໃກ້ໆນີ້ ຖ້າໄກເຂົາໄດ້ເຮົາຈະສະບາຍໃຈຂຶ້ນຫລາຍຫລືບໍ່ ?" ເຮົາຢາກໃຫ້ຄວາມຮັກເຢັນລົງ, ຫາຍໄປຈາກໃຈເຮົາ, ຫາຍໄປກັບຄວາມຫລົງລືມ, ກັບວັນເວລາ ... ທັນໃດພູວັນຮູ້ສຶກວ່າ ຕົນເປັນມານຂອງນ້ອງເອີຍ, ຂອງນ້ອງສາວ ແລະຂອງລູກຜົວຕົນ, ຈະໄປໂທດເຂົາເຮັດຫຍັງ ຜູ້ມີໂທດແມ່ນຜູ້ກໍ່ສົງຄາມ, ຜູ້ຮຸກຮານຊາດ ນາງກໍ່ຮູ້ຢູ່ແລ້ວ - ເມື່ອປີ 1969 ເມື່ອຄວາມຮັກທັງສອງກຳລັງດູດດື່ມ, ພູວັນ ກໍ່ຖືກສັດຕູກວາດຕ້ອນມາວຽງຈັນ, ຍັງແຕ່ພົງເຜົດ ຕອນນັ້ນຊື່ວ່າບຸນທອງ. ເມື່ອປະເທດຊາດຮັບການປົດປ່ອຍແລ້ວ ໃນປີ 1975. ບຸນທອງອອກຈາກກອງຊາງແສງ ມາຢູ່ກອງເສຍອົງຄະ ເຂົາພິການຢູ່ເອິກເບື້ອງຊ້າຍ ຍ້ອນປາດສະເກັດໂບມອອກ. ພູວາໄປຢູ່ກັບປ້າຢູ່ບ້ານວຽງ, ຮັກກັບບຸນທອງ ນາງກໍ່ຂຽນຫນັງສືມາຖາມຄວາມ ເຫັນຂອງເອື້ອຍ, ແຕ່ພູວັນບໍ່ຮູ້ເລີຍວ່າ ແມ່ນບຸນທອງຄົນຮັກເກົ່າຂອງນາງ ເພາະຕອນນີ້ເຂົາໄດ້ໃສ່ຊື່ ພົງເຜົດແລ້ວ.



ເມື່ອໄດ້ເປັນນ້ອງເຂີຍໂດຍບັງເອີນ, ຈະໃຫ້ພົງເພັດປະພຶດ ຕົນແບບໃດຕໍ່ປ້າທີ່ເຄີຍຮັກກັນ, ເຂົາປະພຶດຕົວແບບນີ້ ແມ່ນດີແລ້ວເດ, ເຮົາຈະຕ້ອງການໃຫ້ເຂົາປະພຶດຕົວ ແບບໃດອີກ ດີໄປກວ່ານີ້.

ກ່ອນຈາກມາບ້ານ, ພົງເພັດໄດ້ພະຍາຍາມສັ່ງພູວັນ

"... ປ້າ ... ບອກພູວາມາຫາໄວໆແດ່, ເມື່ອຍ ຫລາຍ ..."

ສຳລັບພູວັນ, ນ້ອງສາວຂອງນາງເປັນ ຄົນໂຊກດີ ທີ່ສຸດໃນໂລກ ພວກນ້ອງຮັກກັນ ຈົນຫນ້າອິດສາເລີຍ. ຂໍໃຫ້ຄູ່ພວກນ້ອງ ມີຄວາມສຸກໃຫ້ເອື້ອຍໄດ້ແຍງເທາະ.

ຫ້ານີ້ຕໍ່ມາ

ພົງເພັດເຈັບຫນັກ, ພູວັນຮູດີກວ່າພູວາວາ ແພດຫມໍ ຫາທາງຊ່ວຍຊີວິດພົງເພັດໄດ້ຍາກແລ້ວ ຍອນແຜເກົ່າ ຢູ່ເອິກ. ມື້ນີ້ພູວັນຈຶ່ງມາເບິ່ງນ້ອງເຂີຍອີກ ນັບແຕ່ນັ້ນມາສິ່ງ.

ເມື່ອນາງແນມເບິ່ງນ້ຳ ທະເລທີ່ຢາດລົງຊາໆນັ້ນ ນາງຮູ້ສຶກວ່າ ພົງເພັດກຳລັງແນມເບິ່ງຕົນ. ນາງປະໃຫ້ເຂົາເບິ່ງໂດຍທຳທ່າບໍ່ສົນໃຈ, ໃນທີ່ສຸດນາງເກີດຫົນຫວາຍ, ຄອບນ້ອງສາວແລ້ວຍ່າງອອກຫ້ອງໄປ.

ເຄິ່ງຊົ່ວໂມງຕໍ່ມາ

"ອ້າຍເພັດບໍ່ຍັງແລ້ວໆ !" ສຽງນ້ອງສາວສະອຶກສະອື້ນໄປໃສ່ເອື້ອຍ ... ພູວັນອຸທານໃນໃຈ: ໂທ້ ອ້າຍທອງຫມົດທໍ່ນີ້ແທ້ໆຫວະ ! ອ້າຍຈາກໄປແລ້ວ ! ອ້າຍເອົາຫນີໄປນຳທຸກໆຄຳຕອບທີ່ນ້ອງຢາກຮູ້, ອ້າຍເປັນຜູ້ຊາຍທີ່ແນບນຽນທຸກໆຢ່າງ ຈົນຮອດມື້ສຸດທ້າຍ ...

ຜູ້ອາບ, ເຊັດໂຕ, ນຸ່ງເຄື່ອງໃຫມ່ ແລະ ເອົາແພຂາວພັນໃຫ້ພົງເພັດ ກໍ່ມີທັງພູວັນ. ເມື່ອມ້ຽນເຄື່ອງນຸ່ງເກົ່າເຂົາເຂົ້າກະເປົາ, ພູວັນພໍ້ກະແຕັບເງິນຂອງເຂົາໃນຖົງໂສ້ງ. ນາງຈົກຄົ້ນແຕ່ລະຫລືບ, ພໍ້ເງິນ, ບັດປະຈຳຕົວ

ແລະ ໃບຫລືບນ້ອຍມີສະປົງຣິດ ນາງພໍ້ຮູບສາມແຜ່ນ, ແຜ່ນໜຶ່ງສີໃຫມ່ໆ ແມ່ນຮູບລູກສາວ ອາຍຸ 2 ຂວບຂອງເຂົາ ກັບຄູ່ຜົວເມຍເຂົາຢືນຮຽງກັນ, ອີກໃບໜຶ່ງ ແມ່ນຮູບຂອງ ພູວັນເອງ ມັນເປັນສີເຫລືອງເກົ່າ, ຊຶ່ງແມ່ນຮູບນາງຖ່າຍ ແລະມອບໃຫ້ເຂົາ ແຕ່ຄາວຍັງຮັກກັນ, ສ່ວນໃບທີສາມ ເປັນຮູບຂອງນາງທີ່ຫາກໍ່ຖ່າຍໃຫມ່ໆ ບໍ່ຮູ້ວ່າເຂົາໄດ້ມາ ຈາກໃສ. ເມື່ອອ່ານໜັງສືຂຽນຢູ່ຫລັງຮູບ ອັນເປັນລາຍມື ຂອງພົງເຜົດເອງ ພາໃຫ້ພູວັນຕົກສະເງີ້ ຈົນເກືອບລືມ ສະຕິໄປ. ນາງກຳຮູບທັງສາມແຜ່ນເຂົ້າ ຈົນບໍ່ຮູ້ວ່າຕົນກຳລັງ ເຮັດຫຍັງ. ທັນໃດນາງຕັ້ງສະຕິໄດ້ ເພາະຄິດຊວາດໄດ້ວ່າ ຄວາມຈິງ ແລະ ຕົວຈິງມັນແມ່ນຄົນລະຢ່າງ, ສັງຄົມ ບໍ່ອະນຸມັດໃຫ້ນາງເປັນເຊັ່ນນັ້ນໄດ້ງ່າຍດາຍ. ວິນຍານ ຂອງເຂົາຍັງຈະຕ້ອງໄດ້ເຮັດໃຫ້ຫົວໃຈພູວາ ທີ່ຍັງເຕັ້ນຢູ່ນັ້ນ ຕ້ອງປອດໃສກັບຄວາມເປັນຜົວເມຍທີ່ຜ່ານມາຂອງເຂົາ ຄືເວລາເຂົາຍັງມີຊີວິດ.

# ທາງສາຍຜານ

*ພວງເພັດ ບົວພະຈັນ*

ນັບແຕ່ກອງສ້າງທາງ ມາຕັ້ງຢູ່ໃກ້ໆບ້ານດອນນາໄຊ, ຫລາຍຄົນໃນຫມູ່ບ້ານ ກໍຮູ້ຈັກຮັກແພວນ ກັບເອົາເຈົ້າ ໃນຖານະລູກຮັກຫລານແພງ. ເພາະບໍ່ພຽງແຕ່ເຮັດວຽກ ຫນ້າທີ່ດຽວແລ້ວ, ໃນຍາມພັກ ເອົາເຈົ້າຍັງໄດ້ຊ່ວຍ ປະຊາຊົນກ່ຽວເຂົ້າ, ເອົາຝືນ ຕະຫລອດຮອດວຽກ ຫນັກງານຫນາຕ່າງໆ. ແມ່ປ້າດວງ ເປັນແມ່ຫມ້າຍ ຫລາຍປີ ມີແຕ່ລູກສາວໂທນ ໃຫຍ່ຂຶ້ນເຕັມສາວ ... ຜູ້ບ່າວຜູ້ແພວ ມາກຫນ້າຫລາຍຕາ ທຽວຂຶ້ນທຽວລົງ

ແຕ່ກໍບໍ່ເຫັນວ່າ ຈະມີຊາຍໃດຖືກຫູຖືກຕາລູກສາວຈັກຄົນ ແມ່ປ້າກໍໄດ້ແຕ່ຫວັງວ່າມື້ໜຶ່ງຂ້າງໜ້າ ອີນາງດອກໄມ້ຈະມີຜູ້ຖືກອົກຖືກໃຈ ແລະ ວຽກໄຮ່ການນາກໍຈະມີຜູ້ມາຜ່ອນເຫື່ອຜ່ອນແຮງຊ່ວຍ. ແຕ່ປ້າກໍບໍ່ແນ່ໃຈປານໃດ ເພາະນັບແຕ່ ທ້າວແສງອຸໄທ ໜຸ່ມຂັບລົດອິນດິນໃນກອງສ້າງທາງ ທີ່ມາຂຶ້ນມາລົງນັ້ນ ບໍ່ຮູ້ອີນາງຄິດແນວໃດ, ແຕ່ກໍປາກົດວ່າ ອີນາງມັກຖາມຫາເລື້ອຍໆ ຍາມລົງໄຮ່ລົງນາ ຫລື ຍາມວັນພະວັນສິນ ຕອນລົງວັດລົງວາ.

" ແມ່ ... ມື້ນີ້ ອ້າຍແສງອຸໄທ ຄືບໍ່ເຫັນມາ "

ນາງດອກໄມ້ ຖາມຜູ້ເປັນແມ່ ຕອນຈະແຕ່ງເຄື່ອງລົງນາກຽວເຂົ້າ.

"ລູກເອີຍ ... ວຽກເພິ່ນກັບວຽກເຮົາມັນບໍ່ຄືກັນ ຜູ້ໜຶ່ງວຽກລັດວຽກຫລວງ ແຕ່ພວກເຮົາ ແມ່ນວຽກເຮືອນການຊານ ບໍ່ມີວັນເສົາວັນທິດ ".

" ແຕ່ມື້ນີ້ ກໍແມ່ນວັນອາທິດພຸ້ນເດ່ ".

ໃນຂະນະທີ່ສອງແມ່ລູກພວມສົນທະນາກັນຢູ່ນັ້ນ ແສງອຸໄທກໍຍ່າງເຂົ້າປະຕູຮົ້ວບ້ານມາ

" ຫັ້ນເດ່ ... ຜູ້ລູກຖາມຫາກໍມາພຸ້ນເດ ".

ດອກໄມ້ກົ້ມໜ້າເຮັດທ່າທາງອຽງອາຍ ແລ້ວກໍຍິ້ມໃສ່ແມ່ ...

ກາງທົ່ງກວ້າງທີ່ມີແສງແດດແຜດເຜົາ ຊາວບ້ານຍັງກ່ຽວເຂົ້າ ບໍ່ຍອມພັກຍອມເຊົາ ຫລາຍຄົນເວົ້າຢອກໄຍກັນມ່ວນຊື່ນ ... ສອງໜຸ່ມສາວ ດົນໆຈະເງີຍໜ້າຂຶ້ນແນມເບິ່ງກັນ ແລ້ວກໍຍິ້ມ. ແສງອຸໄທ ປ້າຍແຂນເສື້ອຂຶ້ນເຊັດເມັດເຫື່ອ ແລ້ວກໍຕັ້ງໜ້າຕັ້ງຕາກ່ຽວເຂົ້າ ດອກໄມ້ວາງກ່ຽວແລ້ວຍ່າງໄປຈັບຈອກ ແລະ ເຕົ້ານ້ຳຍ່າງໄປຫາຊາຍໜຸ່ມ ແລ້ວເວົ້າຂຶ້ນວ່າ :

" ເຊີນດື່ມນ້ຳກ່ອນອ້າຍ ".

ຊາຍໜຸ່ມເງີຍໜ້າຂຶ້ນ ແລ້ວຍິ້ມໃຫ້ນາງ ແລະຕອບວ່າ :

" ຂອບໃຈ ".

ຕາເວັນບ່າຍຄ້ອຍ, ສອງໜຸ່ມສາວນັ່ງພັກຜ່ອນຢູ່ກ້ອງຮົ່ມກົກດອກຈານກາງທົ່ງນາ. ຊາຍໜຸ່ມເອື່ອຍຫລັງໃສ່ລຳຕົ້ນໄມ້ ແລ້ວເງີຍໜ້າຂຶ້ນແນມທ້ອງຟ້າທີ່ມີກ້ອນເຝື້ອສີຂາວພວມໄຫລເລື່ອນລາງ, ສາຍລົມຮ້ອນພັດຜ່ານບາງຄັ້ງຄາວ ທ້ອງທົ່ງນາສີເຫລືອງ ກວ້າງໄກອອກໄປ ຈົນຈຸດຈອດກັບຂອບພູເຂົາ ເຂົານັ່ງຊື່ງບໍ່ປາກ ຄ້າຍຄືພວມຄິດເຖິງສິ່ງໃດໜຶ່ງ ...

" ອ້າຍແສງອຸໄທ ຄິດຮອດແຟນແມ່ນບໍ່ ? ".

ນາງສາວອິດເບິ່ງບໍ່ໄດ້ກໍຖາມຂຶ້ນ, ຊາຍໜຸ່ມ ບໍ່ຕອບແຕ່ກັບອ່ອຍໜ້າມາຈ້ອງແນມເບິ່ງນາງສາວ .

"ບໍ່ຕ້ອງຄິດຫລາຍກະໄດ້ ເພາະວ່າບໍ່ດົນທາງສາຍນີ້ກໍຈະສຳເລັດ ແລະ ອ້າຍກໍຈະໄດ້ກັບໄປຫາແຟນ "

ຄຳເວົ້າຂອງນາງ ເຮັດໃຫ້ຊາຍໜຸ່ມຍິ້ມຈືດໆ ແລ້ວເຂົາກໍເວົ້າຂຶ້ນວ່າ :

"ແມ່ນແລ້ວດອກໄມ້ ບໍ່ດົນທາງສາຍນີ້ກໍຈະສຳເລັດ ແຕ່ອ້າຍກໍບໍ່ຢາກຈາກທີ່ນີ້ໄປເລີຍ"

"ແທ້ບໍ ... ໄດ້ຍິນເຂົາວ່າ ບ່າວໄທວຽງປາກທວານ".

ເວົ້າແລ້ວນາງກໍກົ້ມໜ້າລົງດິນ ຄ້າຍຄືຄຳເວົ້າທີ່ນາງເວົ້າອອກໄປນັ້ນ ມັນເປັນການອົ່ມຝືນຄວາມຮູ້ສຶກຂອງຕົນເອງ ແສງອຸໄທ ສັງເກດເຫັນຄວາມຮູ້ສຶກຂອງນາງ ຈຶ່ງລຸກຂຶ້ນ ແລ້ວຍ່າງມາຫານາງ ແລະເວົ້າຂຶ້ນວ່າ :

" ທວານຫລືອົນ ຕ້ອງລໍໃຫ້ເຖິງມື້ນັ້ນ, ມື້ທີ່ທາງສາຍນີ້ສຳເລັດກ່ອນ ".

ທັງສອງຍິ້ມ ແລະ ແນມເບິ່ງໜ້າກັນ.

ໃນຄືນບຸນປະເພນີຢູ່ວັດ ສອງໜຸ່ມສາວ ຍ່າງວຽນທຽນໄປຮອບໆສິມ ດອກໄມ້ແນມເບິ່ງໜ້າຊາຍໜຸ່ມແລ້ວກໍຖາມວ່າ :

" ອ້າຍກຳລັງອະທິຖານຫຍັງ ? ".

ຊາຍໜຸ່ມແກວ່ງຫົວ ແລ້ວກໍຍິ້ມ

" ບໍ່ອະທິຖານເຖິງ ... ເຖິງອັນ ... ເຖິງ ... ".

" ເຖິງອັນໃດ ? ບອກດອກໄມ້ ".

" ຢ່າເທາະ ... ຢ່າເທາະ ຜູ້ຊາຍແນວໃດ ເວົ້າຫຍັງ ກໍບໍ່ຍອມເອົາໃຈຈັກເທື່ອ ".

ຄືນນັ້ນ, ຊາຍໜຸ່ມຍາງມາສົ່ງດອກໄມ້ເຖິງເຮືອນ, ມີແຕ່ເຂົາທີ່ຊອບເວົ້າຊອບລົມ, ຖາມຄວາມໃດກໍໄດ້ຄວາມນັ້ນ, ແຕ່ເຂົາກໍຮູ້ດີວ່າ ຍ້ອນຕົນເອງແທ້ໆ ເຮັດໃຫ້ນາງຕ້ອງອາລົມບໍ່ດີ

ມື້ນີ້ກໍຄືກັນກັບມື້ທີ່ຜ່ານໆມາ ດອກໄມ້ໄດ້ແຕ່ຄອງຄອຍ ... ຄ້າຍກັບວ່າສິ່ງທີ່ມັນຜ່ານເຂົ້າມາໃນຊີວິດເທື່ອນີ້ມັນມີຄ່າພຽງພໍ ສຳລັບເຮັດໃຫ້ຫົວໃຈຂອງນາງອອນໄຫວ ນາງຢືນຄ້ຳແກ້ມໃສ່ຂອບ ລະບຽງເຮືອນ ສົ່ງສາຍຕາໄປຕາມຕົ້ນທາງ. ສາຍທາງຜ່ານບ້ານເມືອກອນ ມີແຕ່ເຝືອຝຸ່ນ

ມື້ນີ້ ປູຢາງຈົບລະອຽດ ນາງດີໃຈທີ່ຈະບໍ່ມີເຝືອຝຸ່ນປີວ ໃສ່ເຮືອນ, ເສື້ອຜ້າ ແລະ ເຄື່ອງຢູ່ຂອງກິນ ຜັດແຕ່ເກີດ ມາແຕ່ນ້ອຍຮອດໃຫຍ່ ກໍຈຶ່ງມາພົບເຫັນ, ເຫັນທາງ ປູຢາງຜ່ານຫນ້າບ້ານ ຖ້າບໍ່ມີ ພວກອ້າຍແສງອຸໄທ ກໍບໍ່ຮູ້ວ່າຊິໄດ້ເຫັນຫລືບໍ່ ແຕ່ນາງກໍຄ້ອຍໃຈ, ຄ້ອຍໃຈ ນຳມື້ທີ່ອ້າຍແສງອຸໄທ ຈະຍ້າຍຫນີໄປຈາກນາງ ... ຄິດມາແລ້ວດອກໄມ້ກໍໄດ້ແຕ່ຖອນຫາຍໃຈ

ໃນຂະນະທີ່ ນາງພວມຄິດເຖິງສິ່ງໃດຫນຶ່ງນັ້ນ ລົດແກ່ດິນສີເຫລືອງ ຄັນຫນຶ່ງ ກໍແລ່ນມາຈອດ, ນາງດີໃຈຈົນບອກບໍ່ຖືກ ຈຶ່ງຫ້ວງຂຶ້ນວ່າ :

" ອ້າຍ ແສງອຸໄທມາ ! ".

ຊາຍຄົນນັ້ນ ລົງຈາກລົດແລ້ວກໍຍ່າງຂຶ້ນເຮືອນມາ

" ແມ່ເດ ... ນ້ອງດອກໄມ້ ". ຊາຍຫນຸ່ມຖາມຂຶ້ນ.

" ແມ່ໄປນາບໍ່ທັນມາ ".

" ເສຍດາຍເນາະ ທີ່ບໍ່ມີໂອກາດໄດ້ລອບລາເພິ່ນ ".

ຄຳວ່າລອບລາ ເຮັດໃຫ້ດອກໄມ້ໃຈຫາຍ.

" ອ້າຍຈະໄປແລ້ວບໍ ? ".

" ແມ່ນແລ້ວ ພວກອ້າຍຈະໄດ້ອອກເດີນທາງມື້ນີ້ ແລະ ອ້າຍກໍຕັ້ງໃຈມາລາແມ່ ແລະ ນ້ອງ ".

ຄຳເວົ້າຂອງຊາຍໜຸ່ມ ເຮັດໃຫ້ນາງເກືອບນ້ຳຕາໄຫລຊຶມ.

" ນ້ອງດອກໄມ້ ຜ່ານມາ ອ້າຍຂໍໂທດ ".

" ອ້າຍເຮັດຜິດຫຍັງ ຈິ່ງຈະຕ້ອງຂໍໂທດ ".

" ຜ່ານມາ ... ອ້າຍ ... ອ້າຍຕ້ອງ ຕ້ອງຕົວະນ້ອງ ".

ນາງສາວຫລຽວເບິ່ງໜ້າຊາຍໜຸ່ມ ແລ້ວຖາມຄືນວ່າ :

" ອ້າຍຕົວະອັນໃດ ".

" ນ້ອງດອກໄມ້ ... ຜ່ານມາຄືນ້ອງເຫັນອ້າຍໄດ້ປິດບັງຄວາມຮູ້ສຶກຂອງອ້າຍ ກໍເພາະວ່າ ... ອ້າຍ ... ".

ຄຳເວົ້າຂອງຊາຍໜຸ່ມ ຂາດວັກຂາດຕອນ ຈຶ່ງເຮັດໃຫ້ນາງຖາມຕັດຄວາມວ່າ :

" ເພາະວ່າ ອັນໃດ ? ".

" ເພາະວ່າ ນ້ອງເວົ້າຖືກແລ້ວ ຕອນທີ່ຢູ່ກ້ອງຣົ່ມກົກດອກຈານກາງນານັ້ນ ... ມາຮອດມື້ນີ້ ອ້າຍບໍ່ຢາກປິດບັງອັນໃດອີກ ອ້າຍ ... ອ້າຍມີ ... ມີຄົນຮັກແລ້ວ ແລະ ກຳລັງຈະແຕ່ງງານກັນໃນເດືອນໜ້ານີ້ ".

ນ້ຳຕາຂອງຍິງສາວບ້ານນາ ຂຸຫລັ່ນລົງຢ່າງບໍ່ຮູ້ສຶກໂຕ ນາງບໍ່ປາກແມ່ນແຕ່ຄວາມດຽວ ນາງຈຶ່ງຮູ້ວ່າການທີ່ອ້າຍແສງອຸໄທ ບ່າຍບ່ຽງຕະຫລອດມາ ກໍເພາະລາວມີພັນທະຫົວໃຈແລ້ວ ນາງບໍ່ກ້າໂທດເຂົາ ແຕ່ກ່ອນອື່ນກໍຕ້ອງໂທດຕົວເອງທີ່ຫວັງລົມໆ ແລ້ງໆ ທີ່ບໍ່ມີຈຸດໝາຍ ປາຍທາງ.

ລົດສີເຫລືອງຄັນນັ້ນ ແລ່ນອອກໄປແລ້ວ ແຕ່ດອກໄມ້ ຍັງແນມເບິ່ງຢູ່ເບື້ອງຫລັງ ປ່ອຍໃຫ້ລົດຄັນນັ້ນແລ່ນໄປ ແລະ ແລ່ນໄປຈົນລັບສາຍຕາ ... ນາງປ້າຍມືຂຶ້ນເຊັດນ້ຳຕາ ແລະ ຍົກມືອີກເບື້ອງໜຶ່ງໂບກບ່າຍອຳລາ ແລ້ວທັງປາກກໍຈົ່ມພຶມພຳອອກມາວ່າ :

- ລາກ່ອນ ... ລາກ່ອນ ຄວາມຝັນ ຄວາມຝັນທີ່ບໍ່ມີວັນຈະເປັນຄວາມຈິງ ".

*16 / 07 / 1995.*

# ຂອງຝາກອາຕຸ້ມ

*ພອງເພັດ ບົວພະຈັນ*

ສຽງເຄາະປະຕູດັງຂຶ້ນສາມບາດຊ້ອນກັນ, ອັນເຮັດໃຫ້ຄົນໆໜຶ່ງ ທີ່ພວມໝົກໝົ້ນຢູ່ກັບການ ແກ້ວຽກຕ້ອງເອີ້ນຕອບວ່າ :

- ເຊີນ ! ເຊີນເຂົ້າມາ.

ບານປະຕູໄຂອອກ ພ້ອມໆກັບຮ່າງຄີງຂອງຍິງສາວຄົນໜຶ່ງ ຊຶ່ງແມ່ນເພື່ອນຮ່ວມງານໃນຫ້ອງການດຽວກັນກັບຄົນໆນັ້ນ.

"ສະບາຍດີ ອ້າຍຈະເລີນສຸກ".

"ເຈົ້າ ສະບາຍດີ ... ນ້ອງແພງຕາ ມີອັນໃດບໍ".

"ຫ້ອງການໃຫມ່ ພວກນ້ອງຈັດແຈງໃຫ້ອ້າຍແລ້ວ, ບໍ່ຮູ້ວ່າອ້າຍຈະຍ້າຍມື້ນີ້ຫລືບໍ່ ".

ຈະເລີນສຸກ ກົ້ມຫນ້າເຊັນຫນັງສືໃສ່ເອກະສານ ຄືບໍ່ສາມາດດຶງເອົາຄວາມໃສ່ໃຈນັ້ນອອກໄປ ທາງອື່ນໄດ້ໃນເວລານີ້ ນາງສາວຄົນນັ້ນ ລໍຄອຍຄຳຕອບ ຈົນທ່າທາງຄ້າງເຂີນວາດໃດວາດຫນຶ່ງ. ແຕ່ເວລາຕໍ່ມາ ເຂົາກໍເວົ້າຂຶ້ນວ່າ :

"ຂອບໃຈ ທີ່ພວກນ້ອງໄດ້ຈັດແຈງຫ້ອງການໃຫມ່ໃຫ້ອ້າຍ ແລະ ອ້າຍຄິດວ່າຈະຍ້າຍມື້ນີ້ ແຫລະ.

"ອ້າຍມີຫຍັງໃຫ້ນ້ອງຊ່ວຍບໍ ". ແພງຕາຖາມຜູ້ເປັນຫົວຫນ້າຄືນ.

"ບໍ່ ... ບໍ່ດອກ ລົບກວນພວກນ້ອງຊື່ໆ ມີວຽກອື່ນກໍໄປເຮັດກ່ອນເດີ ອ້າຍມີຫຍັງຈະເອີ້ນດອກ ".

ເຈົ້າ ... ". ແພງຕາງຶກຫົວຕອບ ແລ້ວກໍຖອຍ

ຫລັງອອກຈາກປະຕູໄປ. ຈະເລີນສຸກ ເລື່ອນຂັ້ນຈາກຕໍາແໜ່ງຫົວໜ້າພະແນກ ຂຶ້ນມາເປັນຮອງຫົວໜ້າກົມ ເຂົາຈຶ່ງຕ້ອງໄດ້ຍ້າຍ ຫ້ອງເຮັດວຽກໄປອີກຫ້ອງໜຶ່ງ. ຈະເລີນສຸກ ມັຽນມັດເອກະສານທີ່ຈຳເປັນໄວ້ແລ້ວ ເຂົາກໍໄຂຕູ້ເອກະສານທີ່ຕັ້ງຢູ່ຂ້າງໂຕນັ້ນອອກມາ. ແຕ່ປາກົດວ່າສາຍຕາ ຂອງເຂົາໄປພົບກັບຂອງສິ່ງໜຶ່ງ ເຂົ້າ

"ຕຸກກະຕາຫອຍທະເລ !" ເຂົາຫົວງຂຶ້ນຄ່ອຍໆ

- "ຕຸກກະຕາຫອຍທະເລ ທີ່ຂ້ອຍລືມບ່ອນໄວ້ແຕ່ດົນແລ້ວ ເປັນຫຍັງຈຶ່ງມາຢູ່ບ່ອນນີ້ໄດ້". ເຂົາຈົ່ມພຶມພໍາກັບຕົນເອງ ແລ້ວກໍຄ່ອຍໆຈັບຂອງສິ່ງນັ້ນຂຶ້ນມາ ແຕ່ສຸດທ້າຍເຂົາກໍເຂົ້າໃຈວ່າ ເປັນຫຍັງຜ່ານມາ ຈຶ່ງບໍ່ເຫັນຂອງສິ່ງນີ້ໃນສາຍຕາເລີຍ ກໍເພາະຄວາມບໍ່ໃສ່ໃຈນັ້ນເອງ ເຂົາຈັບມາ ວາງໄວ້ໜ້າໂຕະເຮັດວຽກ ແລ້ວຈະເລີນສຸກ ກໍນັ່ງລົງຈ້ອງຕາເບິ່ງຕຸກກະຕາທີ່ມຸມມອນດ້ວຍຄາບຝຸ່ນນັ້ນ ເຂົາເດ່ດືອມືໄປເຊັດ

ຄາບຝຸ່ນບາງບ່ອນອອກ ດ້ວຍຄວາມບັນຈົງຮັກແພງ ແລະ ຂອງສິ່ງນີ້ແຫລະ ເຮັດໃຫ້ເຂົາຕ້ອງຫວນຄິດເຖິງ ເຫດການຄັ້ງໜຶ່ງທີ່ມັນເຄີຍ ຜ່ານເຂົ້າມາໃນຊີວິດ

ປີ 1980, ຕອນຈະເລີນສຸກ ຍົກຍ້າຍມາປະຈຳການ ຢູ່ບ່ອນນີ້ໃໝ່ໆ " ຕຸກກະຕາ ຫອຍທະເລ " ອັນນີ້ໄດ້ມາພ້ອມໆກັບເຂົາ. ຄືນນັ້ນ, ຈະເລີນສຸກໄປຫາ ແພງຕາ ຊຶ່ງແມ່ນຄົນຮັກ ຜູ້ທີ່ເຂົາເຄີຍຮ່ວມຮຽນໜັງສື ດ້ວຍກັນຕະຫລອດມາ ຄວາມໃກ້ຊິດຕິດພັນ ຈາກ ເພື່ອນທຳມະດາ ກໍກາຍມາເປັນເພື່ອນຮັກ ທັງສອງ ເຄີຍໃຫ້ຄຳໝັ້ນສັນຍາຊຶ່ງກັນ ແລະ ກັນວ່າ ຈະຮັກດຽວ ໃຈດຽວ ແລະ ບໍລິສຸດສັດຊື່ຕໍ່ກັນ ຢູ່ໃສມີເຂົາ ບ່ອນນັ້ນຈະມີນາງ ແລະ ແລ້ວຄວາມຮັກນັ້ນ ກໍໄດ້ຮັບ ການທະນຸຖະໜອມຕະຫລອດມາ ແລະ ນັບມື້ກໍນັບ ມີຄວາມໝາຍຂຶ້ນ.

ຄືນນັ້ນ, ທີ່ຫ້ອງຮັບແຂກ ເຮືອນຂອງແພງຕາ ທັງສອງນັ່ງເຊິ່ງໜ້າກັນ ແລະ ຂັ້ນກັນແຕ່ໂຕະນ້ອຍ

24/VII
ຫ້າມຈຳໜ່າຍ

ຫນ່ວຍຫນຶ່ງເທົ່ານັ້ນ ທັງສອງບໍ່ຄ່ອຍເວົ້າຄ່ອຍຈາ ນອກຈາກແນມເບິ່ງຫນ້າກັນ ເປັນບາງຄັ້ງຄາວ. ຈະເລີນສຸກຈະກົ້ມເບິ່ງປື້ມຮູບທີ່ເອົາເຈົ້າເຄີຍຖ່າຍຮູບຮ່ວມກັນ ແລະຕອນຫນຶ່ງນາງໄດ້ເວົ້າຂຶ້ນ ເພື່ອທຳລາຍຄວາມມິດງຽບນັ້ນວ່າ :

" ອ້າຍຈະເລີນສຸກ "

ຈະເລີນສຸກອັດປື້ມຮູບໄວ້ແລ້ວ ເງີຍຫນ້າຂຶ້ນເບິ່ງນາງ

" ອ້າຍຈະເລີນສຸກ ບໍ່ແມ່ນນ້ອງລືມຄຳຫມັ້ນສັນຍາ ແຕ່ນ້ອງບໍ່ສາມາດປະຕິເສດ ການຂໍຮ້ອງຂອງພີ່ນ້ອງ ແລະ ພໍ່ແມ່ໄດ້ ແມ່ຂອງນ້ອງ ແລະແມ່ຂອງເຂົາຄົນນັ້ນ ເຄີຍເປັນເພື່ອນຮັກແພງກັນແຕ່ນ້ອຍໆ, ນ້ອງພະຍາຍາມບ່າຍບ່ຽງປະຕິເສດ, ແຕ່ທຸກຄັ້ງແມ່ຈະເສຍໃຈຫລາຍ ນ້ອງສົງສານແມ່ . ສົງສານຄວາມຕັ້ງໃຈຂອງເພິ່ນ ອ້າຍຈະເລີນສຸກ ຮູ້ບໍ່ວ່າ ຄອບຄົວພໍ່ແມ່ຂອງອ້າຍ ແລະນ້ອງ ຮູ້ແຕ່ວ່າ

ເຮົາສອງເປັນເພື່ອນຮ່ວມຮຽນນຳກັນເທົ່ານັ້ນ ເພາະຜ່ານໆມາ ພວກເຮົາກໍບໍ່ໄດ້ສະແດງສິ່ງໃດໃຫ້ນອກເໜືອໄປຈາກການໄປຫາ ມາສູ່ກັນທຳມະດາ ແຕ່ເມື່ອແມ່ມາຕົກລົງກັບຄົນອື່ນແລ້ວ ນ້ອງຈຶ່ງຮູ້ວ່ານ້ອງ ... ນ້ອງ ...

ແພງຕາ ເວົ້າໄປລົມໄປຢູ່ຄົນດຽວ ແຕ່ເມື່ອຄຳເວົ້ານັ້ນບໍ່ມີການໃສ່ໃຈຂອງຝ່າຍກົງກັນຂ້າມ ນາງກໍຢຸດຄ້າງປະໂຫຍກຄວາມເວົ້າທີ່ບໍ່ທັນຈົບນັ້ນ ແລ້ວຫັນມາຖາມຈະເລີສຸກ.

" ອ້າຍຈະເລີນສຸກ ອ້າຍບໍ່ຟັງນ້ອງເວົ້າແມ່ນບໍ່ ? ".

ເຂົາຖອນຫາຍໃຈບາດຍາວໆ ແລ້ວເວົ້າຂຶ້ນວ່າ :

" ນ້ອງແພງຕາ ອ້າຍຮູ້ວ່າ ລູກທີ່ດີຄວນມີຄວາມກະຕັນຍູ, ຖ້າຫາກອ້າຍຮູ້ວ່າ ທຸກຢ່າງທີ່ມັນເກີດຂຶ້ນ ຍ້ອນເຫດຜົນອື່ນ ອ້າຍຈະເສຍໃຈທີ່ສຸດ ແຕ່ ... ແຕ່ວ່າ ... ".

" ແຕ່ວ່າອັນໃດລະອ້າຍ ". ນາງຮ້ອນໃຈຖາມຕັດຄວາມ.

" ແຕ່ວ່າ ... ນ້ອງກໍເຮັດຖືກແລ້ວເດ ".

... ແລະແລ້ວ ຄວາມມິດງຽບກໍປົກຄຸມທົ່ວຫ້ອງຮັບແຂກນັ້ນອີກເທື່ອໜຶ່ງ, ຢູ່ອ້າງນອກມີສາຍລົມພັດຜ່ານໃບພ້າວ ເອນອຽງຄືສິ່ງທີ່ມີຊີວິດວິນຍານ ຈະເລີນສຸກເວົ້າຂຶ້ນຄ່ອຍໆ ວ່າ :

" ນ້ອງແພງຕາ, ຈາກກັນມື້ນີ້ແລ້ວ ບໍ່ຮູ້ວ່າດົນນານປານໃດ ຈຶ່ງຈະໄດ້ພົບກັນອີກ ".

ຄຳເວົ້ານີ້ເຮັດໃຫ້ນາງສະທ້ານໃຈ, ຄຳເວົ້ານີ້ເຮັດໃຫ້ນາງຄິດເຖິງເຫດການເກົ່າໆ ທີ່ຜ່ານເຂົ້າມາໃນຊີວິດລະຫວ່າງເຂົາ ແລະ ນາງ ຄວາມສຸກໃດຈະເທົ່າກັບຄວາມຮັກໃນຍາມເປັນໜຸ່ມ ໄວຄະນອງ ... ແຕ່ຄືນນີ້ ແລະ ເວລານີ້ ຄວາມຮັກນັ້ນພວມຈະແຕກສະຫລາຍເຖິງນາງຈະຮັກເຂົາພຽງໃດ ແຕ່ນາງກໍບໍ່ອາດເປັນຄົນອະກະຕັນຍູຕໍ່ພໍ່ ແລະ ແມ່ໄດ້. ຜ່ານມານາງຮູ້ວ່າ

ຫນຸ່ມສາວບາງຄົນ ຮັກມັກຈົນລະເລີຍຕໍ່ຮີດຄອງປະເພນີ ພໍ່ແມ່ເວົ້າວ່າ ຫ້າມປາມກໍເປັນເລື່ອງໃຫມ່ເມື່ອມາຄິດໄດ້ ທຸກຢ່າງກໍບໍ່ສາມາດແກ້ໄຂໃຫ້ດີຄືນໄດ້ອີກແລ້ວ. ດັ່ງນັ້ນ, ນາງຈຶ່ງຕັດສິນໃຈ ເຖິງຈະເປັນການຫັກຫ້າມຫົວໃຈພຽງໃດ ແຕ່ນາງກໍບໍ່ອາດຫລີກລ່ຽງເຈດຕະນາຂອງຜູ້ເປັນພໍ່ ແລະ ແມ່. ພວກເພິ່ນຮູ້ວ່າຊາຍຄົນທີ່ນາງພວມຈະຮ່ວມຊີວິດນຳ ມີຫນ້າທີ່ການງານເປັນຫລັກເປັນຖານຫມັ້ນຄົງ, ແຕ່ອ້າຍຈະເລີນສຸກຫາກໍຈົບຊັ້ນອຸດົມ ແລະ ກໍມີຊື່ສຽງຊ້ອນໄປຮຽນຕໍ່ຕ່າງປະເທດ. ສະນັ້ນ ພໍ່ແມ່ຈຶ່ງຄາດຄະເນວ່າ ອ້າຍຈະເລີນສຸກຍັງມີພາລະຫນ້າທີ່ຈະຕ້ອງເຮັດຢ່າງຫລວງຫລາຍພາຍນາກ. ຄິດມາແລ້ວກໍຄືຄວາມພໍ່ແມ່ວ່າ

" ອ້າຍຈະເລີນສຸກ ... ກ່ອນຈາກນ້ອງນີ້ຂອງຝາກສິ່ງຫນຶ່ງໃຫ້ອ້າຍ, ຂອງນີ້ບໍ່ມີຄ່າ ແຕ່ກໍແມ່ນສິ່ງຂອງທີ່ນ້ອງເລືອກເອງ ນ້ອງຮັກຂອງສິ່ງນີ້ທີ່ສຸດ. ຕະຫລອດເວລາມັນຢູ່ນຳນ້ອງ ບໍ່ເຄີຍຫ່າງຫນີ ແຕ່ຄືນ

ນີ້ນ້ອງຈະມອບໃຫ້ອ້າຍ ມອບໃຫ້ເປັນຂອງທີ່ລະລຶກແທນກາຍ. ຫວັງວ່າອ້າຍຈະເກັບຮັກສາມັນໄວ້, ມັນອາດຈະຊ່ວຍເປັນກຳລັງໃຈ ແກ່ອ້າຍ ໃນຍາມໂສກເສົ້າເຫງົາໃຈ ມື້ໃດໄດ້ດີມີຖານະ ຖ້າເຫັນຂອງສິ່ງນີ້ແລ້ວກໍຢ່າລືມຄິດເຖິງນ້ອງແດ່ ອ້າຍຈະເລີນສຸກ .

ນາງຍື່ນກ່ອງຂອງຂວັນນ້ອຍໆ ນັ້ນໃຫ້ເຂົາ ແລ້ວນາງກໍເວົ້າຕໍ່ວ່າ :

" ອ້າຍຄົງຢາກຮູ້ວ່າ ຂອງສິ່ງນີ້ແມ່ນຫຍັງ ແມ່ນບໍ່ແຕ່ບໍ່ເປັນຫຍັງ ເມື່ອເວລາໃດອ້າຍເຂົ້າໃຈໃນຄວາມປະສົງຂອງນ້ອງ ແລະ ອະໄພແກ່ນ້ອງແລ້ວ ອ້າຍກໍສາມາດໄຂເບິ່ງໄດ້ວ່າ ຂອງສິ່ງນັ້ນຄືຫຍັງ ".

ຈະເລີນສຸກຈັບເອົາຂອງສິ່ງນັ້ນຈາກມືນາງ ແລະມາຮອດເວລານີ້ແຫລະ ເຂົາຈິ່ງຮູ້ວ່ານາງຜູ້ທີ່ຢູ່ເຊິ່ງໜ້າເຂົານັ້ນ ເປັນຍິງທີ່ເຂັ້ມແຂງ, ມີເຫດຜົນ ແລະສິ່ງທີ່ນາງເຮັດໄປ ລ້ວນແຕ່ ມີຄວາມຈຳເປັນ ຈະເລີນສຸກລຸກຂຶ້ນ ແລ້ວກ່າວອຳລານາງ

ຄືນນັ້ນ, ທ່ານກາງສາຍລົມໜາວຂອງລາຕີການ ທີ່ຫົດຫູ່ ຈະເລີນສຸກ ໄດ້ສູນເສຍສິ່ງໃດໜຶ່ງ ທີ່ສຸດຮັກ ແສນແພງໃນຊີວິດຂອງເຂົາໄປ ເຂົາຍ່າງໄປຕາມທາງທີ່ມີແສງສະຫວ່າງ ຈາກເສົາໄຟຟ້າຂ້າງຖະໜົນ ແຕ່ໃນສ່ວນໜຶ່ງຂອງຄວາມນຶກຄິດນັ້ນ, ຄ້າຍຄືວ່າ ໂລກໜ່ວຍນີ້ ມີແຕ່ເຂົາພຽງຄົນດຽວ

ຈະເລີນສຸກ ຕື່ນຈາກຄວາມຄິດຝັນ ເພາະມີສຽງເຄາະປະຕູອີກເທື່ອໜຶ່ງ ເຂົາຈຶ່ງຟ້າວເວົ້າຂຶ້ນວ່າ :

" ນ້ອງແພງຕາ ຊ່ວຍເອົາເອກະສານນີ້ຍ້າຍໄປໃຫ້ອ້າຍແດ່ ".

ຈະເລີນສຸກບໍ່ໄດ້ສົນໃຈນຳອັນໃດອີກ ນອກຈາກຈັບເອົາຕຸກກະຕາຫອຍທະເລນັ້ນ ຍ້າຍໄປຢູ່ຫ້ອງເຮັດການໃໝ່ນຳ.

*17 / 07 / 1995*

# ແດ່ ຜູ້ເປັນແມ່

**ດອກເກດ**

* ເມື່ອຍັງເປັນແຕ່ລູກຂອງແມ່ ເຮົາກໍຮັກແມ່
ແລະ ຮູ້ວ່າ ແມ່ກໍຮັກເຮົາ ... ແລ້ວກະທໍ່ນັ້ນ !
ແຕ່ເມື່ອເຮົາມາເປັນແມ່ຂອງລູກ ເຮົາຈຶ່ງສຳນຶກໄດ້ວ່າ
ຄວາມຮັກ ຄວາມຜູກພັນລະຫວ່າງ
ຜູ້ເປັນແມ່ ແລະ ລູກນັ້ນ
ມັນເລິກເຊິ່ງ ໜັ້ນແກ່ນ
ໜັກແໜ້ນ ເກີນກວ່າທີ່ ບຸກຄົນໃດໆ
ທີ່ບໍ່ແມ່ນແມ່ ແລະ ລູກກັນ ບໍ່ອາດສຳນຶກໄດ້ !

* ໂອ້ ... ຄວາມສຸກທຸກອັນໃດ
ທີ່ເກີດມີມາຄູ່ໂລກ ຄູ່ຟ້າ ຄູ່ແຜ່ນທໍລະນີ
ມາຕະຫລອດເທົ້າທຸກມື້ນີ້
ມີອັນໃດປຽບປານທຽມທັນ ຄວາມຮູ້ສຶກສຳນຶກ
ຂອງແມ່ຍິງຜູ້ເຊິ່ງ ພວມຈະໃຫ້ກຳເຫນີດຊີວິດນ້ອຍໆ ?
ບໍ່ວ່າຍິງຜູ້ນັ້ນ ຈະເປັນຄົນຊາດໃດ? ຜິວພັນສີໃດ?
ຊົນຊັ້ນໃດ? ນັບຖືສາດສະຫນາໃດ?
ການກຳເຫນີດລູກ ມັນເປັນຫນ້າທີ່ ທີ່ຄວນຍົກຍ້ອງບູຊາ !
ມັນເປັນການເສຍສະຫລະອັນສູງສົ່ງຂອງແມ່ຍິງ !

* ນັບແຕ່ນີ້ລູກແຮກກໍ່ ຈໍ່ເກີດລູກໃນທ້ອງ
ຜູ້ເປັນແມ່ກໍນັບມື້ ມີພາລະຫນັກຫນ່ວງທໍລະມານ
ທາງປາກຮຸ່ມຮ້ອນ ປານຖືກນ້ຳກົດລວກລົນ
ຈິດໃຈສັບສົນ ... ວິນວາຍ ລົມຫັນໃຈເລີກເມື່ອຍ
ທາງອຸທອນກໍອັດແຫນ້ນ ຫນ້າທົນຫວາຍ ...



* ແຕ່ລະນາທີ ... ຊົ່ວໂມງ ... ວັນເດືອນ ຜ່ານໄປ
ຊີວິດນ້ອຍໆເຕີບໃຫຍ່ຂະຫຍາຍໂຕ
ຍຶດຄອງເອົາອຸທອນຂອງແມ່ເປັນບ່ອນຢູ່ກິນ
ຈົນເຖິງວັນທີ່ຈະດັ້ນດົ້ນອອກມາ ສູ່ໂລກພາຍນອກ.
ນັ້ນ ມັນຫມາຍເຖິງການແຍກໂຕໃນໄລຍະທຳອິດ
ລະຫວ່າງ ແມ່ ແລະ ລູກ.

* ໂອ້ນໍ ... ຄວາມສຸກໃດປຽບປານ
ຍາມມືຂອງແມ່ ໄດ້ສຳຜັດກັບອາການເຫນັງຕີງ
ຂອງລູກໃນອຸທອນ
ແລະ ຄວາມເຈັບປວດຫນັກຫນ່ວງທີ່ລະມານອັນໃດ ປຸນປຽບ
ເມື່ອເວລານັ້ນມາເຖິງ!
ເອົາສັຽນ ເອົາເຂັມ ຮ້ອຍດວງພັນດວງ ຫມື່ນດວງ
ມາສຽບແທງເຂົ້າທີ່ວຮ່າງຄີງ ຂອງແມ່
ສຽບເຂົ້າແຕ່ລະຂຸມຂົນ ...

ແລ້ວຄ່ອຍຖອດອອກ ... ຖອດອອກເທື່ອລະດວງ
ກອງວາງໄວ້ ກອງໄວ້ ...
ແຕ່ລະດວງເຂັມ ແຕ່ລະສັຽນ
ຖືວ່າແມ່ນຫົວໜ່ວຍຂອງຄວາມເຈັບປວດທໍລະມານ ...
ຊິ່ວຈະຖອດຖອນອອກໝົດ
ມັນຄົງກອງຖ້ວມເຮືອນຫລັງສູງໃຫຍ່ ຈົນນັບບໍ່ໄຫວ

* ໃຜນໍ ແບ່ງປັນເອົາໄປໄດ້ ? ບໍ່ເລີຍ!
ແຕ່ ... ມັນເທືອດຫາຍໄປປານລົມພັດຜ່ານ
ປານໝອກເໜືອຍ ເທີຍຫາຍຍາມຕ້ອງແສງແດດທີ່ແກ່ກ້າ
ພອນນັ້ນ ... ແມ່ຄິດວ່າຫົວໃຈຄົງຢຸດເຕັ້ນ
ສະໝອງເຊົາບັນຊາການ ເລືອດໃນຮ່າງເຊົາແລ່ນ

* ສຽງແຜດຮ້ອງດັງຜ່າລົມທັນໃຈ ອັນທີດທອບຂອງແມ່ຂົ້ນ
ຄວາມໜັກໜ່ວງ ທີ່ເຕັງໜີບຢູ່ກາງຫວ່າງເອິກ
ຄວາມເຈັບປວດຈ້າວໆ ທີ່ຄອບຄອງທົ່ວຮ່າງກາຍ

ບໍ່ຮູ້ວ່າເຫື່ອດຫາຍ ສາບສູນໄປແຕ່ຫວ່າງໃດ ...
ເຫື່ອແຮງຂອງແມ່ທີ່ຍັງຫລົງເຫລືອ
ຖືກຫລໍ່ຫລອມໃຫ້ກາຍເປັນ ພະລັງກະແສສຽງ
ປັ່ນແປ ອອກເປັນອາຈາພໍໄດ້ຍິນວ່າ :
" ລູກ ... ຂອງແມ່ ! "

* ທີ່ນັ້ນເອງ ...
ສິ່ງທີ່ແລກປ່ຽນກັບຄວາມທົນທຸກ
ຄວາມເຈັບປວດອັນຍືດເຍື້ອ ຍາວນານ !
ແລກປ່ຽນກັບກະແສເລືອດສີແດງ
ພະລັງງານ ເຫື່ອແຮງທັງມວນ ທີ່ມີຢູ່ໃນໂຕຂອງແມ່
ຊີວິດນ້ອຍໆຊີວິດໜຶ່ງ
ທີ່ຈະເຕີບໃຫຍ່ຂຶ້ນ ເປັນໜໍ່ແໜງຂອງສັງຄົມ
ຂອງປະເທດຊາດ!

* ແຕ່ລະມື້ ... ແຕ່ລະຊົ່ວໂມງ ... ແຕ່ລະນາທີ ...
ມີແມ່ຢູ່ທົ່ວທຸກແຈໂລກພວມເສຍສະຫລະ
ພວມປະຕິບັດໜ້າທີ່ ອັນໜ້າສັກກາລະບູຊາ ນີ້ຢູ່.
ດ້ວຍໃຈຫວັງຢ່າງສູງສົ່ງວ່າ
ເຂົາຈະເປັນຜູ້ໜຶ່ງຂອງສັງຄົມ ຂອງຊາດ
ດ້ວຍຄວາມປາຖະໜາ ແລະ
ເຊື່ອໝັ້ນຢ່າງແຂງຂັນວ່າ ...
ມວນມະນຸດໃນສັງຄົມນີ້
ຈະເປັນຜູ້ເສີມຕໍ່ກໍ່ສ້າງ ຊີວິດນ້ອຍໆຂອງເຂົາ
ໃຫ້ຈະເລີນຮຸ່ງເຮືອງ ... ເມື່ອໜ້າ
ນັ້ນແມ່ນຄວາມຫວັງ ຈາກຫົວໃຈຂອງຜູ້ເປັນແມ່.



# ທິດາຈັນ

- ເກີດ : ວັນທີ 2/12/1954 ທີ່ບ້ານເພຍວັດ ເມືອງຄູນ ແຂວງຊຽງຂວາງ ເຜົ່າພວນ
- ປະຈຸບັນ ຢູ່ບ້ານດົງໂດກ ເມືອງໄຊທານີ ກຳແພງ ນະຄອນວຽງຈັນ
- ວຽກງານ : ປະຈຸບັນ ເປັນບັນນາທິການ ໜັງສືພິມ ແມ່ຍິງລາວ

ແຕ່ກ່ອນ ເຄີຍເປັນຄູສອນ ຕັ້ງແຕ່ອາຍຸ 15 ປີ, ສອນຊັ້ນມັດທະຍົມ, ອຸດົມ, ສ້າງຄູ ແລະ ມະຫາວິທະຍາໄລສ້າງຄູ ທັງໝົດ 22 ປີ ( ບໍ່ນັບເວລາຮຽນ ວິຊາຊີບຄູ )

- ໃນເວລາສິດສອນ ໄດ້ຂຽນບົດປະພັນວັນນະຄະດີໄປພ້ອມ
- ເລີ່ມຂຽນແຕ່ ປີ 1978
- ນັກຂຽນປະເພດເລື່ອງສັ້ນ, ເລື່ອງບັນທຶກ, ກາບກອນ ແລະ ປະເພດບົດວິຈານ, ບົດສະເໜີ ທັດສະນະ, ນັກແປບົດວັນນະຄະດີຕ່າງປະເທດ, ພິເສດ ນັກຮຽບຮຽງ ນິທານພື້ນເມືອງລາວ. ເຄີຍໄດ້ຮັບຮາງວັນເລື່ອງສັ້ນ ທີ 1, ທີ 2 ແລະ ທີ 3 ຫລາຍບົດ.

- ນັກຂຽນເລື່ອງສັ້ນທີ່ເວົ້າເຖິງອະດີດ ການຕໍ່ສູ້ຂອງຊາວໜຸ່ມ, ແມ່ຍິງ ໃນສະໄໝຕໍ່ສູ້ກູ້ຊາດ, ຂຽນກຽວກັບຊີວິດສູ້ຊົນທຳມາຫາກິນ ແລະ ກ້າວຂຶ້ນເປັນຄົນແບບໃໝ່ ຂອງແມ່ຍິງ

ລາວ ຢູ່ໃນເມືອງ ແລະ ຊົນນະບົດ ໂດຍສະເພາະແມ່ນ ຄົນໃນຖິ່ນແຖວດູສອນ ແລະ ຊາວໄຮ່ນາ.

- ບົດຂຽນສ່ວນຫລາຍ ລົງພິມໃນໜັງສືພິມ, ວາລະສານ ວັນນະສິນ, ແມ່ຍິງລາວ
- ເຄີຍໄດ້ປະກອບສ່ວນເຄື່ອນໄຫວ ໃນສະໂມສອນນັກຂຽນ ໜຸ່ມ ແລະ ໄດ້ອົບຂວາຍສ້າງຕັ້ງ ສະມາຄົມ ນັກປະພັນລາວ.

- ປະຈຸບັນໄດ້ຄັດເລືອກຂຽນ ກ່ຽວກັບບັນຫາແມ່ຍິງ ສ່ວນຫລາຍ, ເພາະໄດ້ຄິດວ່າ : ມີແຕ່ແມ່ຍິງ ເຂົ້າໃຈບັນຫາ ແລະ ສຸດພິເສດຂອງເພດຍິງ ໄດ້ແທດເຖິງ ແລະ ຂຽນ ກ່ຽວກັບ ແມ່ຍິງໃຫ້ໄດ້ຫລາຍ ແລະ ເຖິງໃຈແມ່ຍິງດ້ວຍກັນ.



# ພອງເພັດ ບົວພະຈັນ

## ຄວາມຮູ້ສຶກຂອງຜູ້ຂຽນ

ຂ້າພະເຈົ້າ ນ. ພອງເພັດ ບົວພະຈັນ ຫາກໍ່ກ້າວເຂົ້າມາສູ່ວົງການຂີດຂຽນໃນເມື່ອຕົ້ນປີ 1995 ນີ້ເອງ, ທີ່ເຄີຍຂຽນບົດເລື່ອງສັ້ນ, ສາລະຄະດີ, ນິທານເດັກນ້ອຍ ອອກສູ່ສາຍຕາຂອງຜູ້ອ່ານ ໃນວາລະສານວັນນະສິນ, ໜັງສືພິມລາຍວັນ ແລະ ອື່ນໆ.

ແຕ່ເຖິງຢ່າງໃດ ຂ້າພະເຈົ້າກໍ່ຍັງແມ່ນນັກຂຽນນ້ອງໃໝ່ ທີ່ຫວັງປະສົບການ ແລະ ຕ້ອງການ ມີຜົນງານຫລາຍກວ່ານີ້, ສໍາຫລັບໃນວົງການນັກປະພັນລາວ ຂ້າພະເຈົ້າກໍ່ແມ່ນຜູ້ໜຶ່ງ ຊຶ່ງພວມເດີນໜ້າຂຶ້ນໄປຕາມຮອຍນັກຂຽນຮຸ່ນອ້າຍ, ຮຸ່ນເອື້ອຍ ດ້ວຍຄວາມຫວັງອັນແຮງກ້າ ເພື່ອໄປເຖິງ ຈຸດໝາຍປາຍທາງ.

ເມື່ອປີ 1987 ຂ້າພະເຈົ້າໄດ້ຮຽນຈົບວິຊາສະເພາະ ຫ້ອງສະໝຸດ ແລະ ວັນນະຄະດີ ຢູ່ທີ່ອະດີດສະຫະພາບ ໂຊວຽດ ແລະ ປີດຽວກັນນີ້ ກໍ່ຖືກສັບຊ້ອນສັງກັດເປັນ ພະນັກງານວິຊາການ ຢູ່ສະຖາບັນຄົ້ນຄວ້າ ວິທະຍາສາດ ການສຶກສາ, ຂ້າພະເຈົ້າກໍ່ໄດ້ມີໂອກາດອ່ານ ແລະ ຄົ້ນຄວ້າເຖິງ ບົດປະພັນ ວັນນະກໍາ ຂອງນັກຂຽນລາວ ແລະ ຕ່າງປະເທດຢ່າງຫລວງຫລາຍ ຍ້ອນເງື່ອນໄຂດັ່ງກ່າວ ຈຶ່ງເປັນແຮງດົນໃຈໃຫ້ຂ້າພະເຈົ້າ ເລີ່ມຈັບປາກກາເພື່ອ ຂຽນບົດປະພັນ, ນອກຈາກນັ້ນ ກໍ່ຍັງມີໂອກາດພົບປະ

ແລກປ່ຽນ ບົດຮຽນກັບບັນດານັກຂຽນລາວ ຮຸ່ນອ້າຍ, ຮຸ່ນເອື້ອຍ ປະກອບໃສ່ແຮງໃຈຂອງເພື່ອນໆ ຊຶ່ງຊຸກຍູ້ໃຫ້ຂຽນ ແລະ ບົດເລື່ອງທີ່ຂ້າພະເຈົ້າໄດ້ຂຽນຂຶ້ນມາ ກໍຄືເລື່ອງ : ທາງສາຍຜ່ານ, ບົວແຄມບຶງ, ຂອງຝາກອາຖັນ, ອ້ອມອົກແມ່, ແມ່ຍິງສອງສະໄຫມ, ຄໍາຂໍໂທດທີ່ບໍ່ຍອມໃຫ້ອະໄພ, ຄືນນັ້ນທີ່ຝັນຮ້າຍ, ຕໍາຫລວດນອກເຄື່ອງແບບ ແລະ ອື່ນໆ. ນອກນີ້ ຍັງມີບົດສາລະຄະດີ ໃນຫົວບົດ " ຫ້ອງສະຫມຸດ ແລະ ສັງຄົມ ", ຊີວິດໄວຮຸ່ນ ...

ຂ້າພະເຈົ້າ ໄດ້ເຮັດວຽກຢູ່ສະຖາບັນຄົ້ນຄວ້າ ວິທະຍາສາດການສຶກສາ ເປັນເວລາ 8 ປີ ມາຮອດປີ 1995 ຍ້ອນວຽກງານຮຽກຮ້ອງຕ້ອງການ ຂັ້ນເທິງຈຶ່ງໄດ້ຍົກຍ້າຍຂ້າພະເຈົ້າມາເຮັດວຽກຢູ່ກົມຈັດຕັ້ງ ກະຊວງສຶກສາທິການ ແລະ ຍັງໄດ້ເຂົ້າເປັນຄະນະປະຈໍາຊາວຫນຸ່ມ ຂອງກະຊວງສຶກສາທິການ. ເຖິງວ່າວຽກງານ ຈະຫລວງຫລາຍປານ

ໃດກໍ່ຕາມ ຂ້າພະເຈົ້າກໍ່ພະຍາຍາມຍາດເວລາ ເພື່ອຂຽນບົດປະພັນ ແລະ ມາຮອດປະຈຸບັນນີ້ ກໍ່ມີບົດເພື່ອສະສົມໄວ້ເພື່ອຈະພິມອອກສູ່ສາຍຕາທ່ານຜູ້ອ່ານ.

ຍ້ອນຜົນງານ ແລະ ການເຄື່ອນໄຫວຂອງຂ້າພະເຈົ້າ ທາງການຈັດຕັ້ງ ຈຶ່ງໄດ້ສັບຊ້ອນໃຫ້ໄປ ສຶກສາຕໍ່ທີ່ໂຮງຮຽນກົດໝາຍຊັ້ນສູງ ອີກ 5 ປີ ໃນອະນາຄົດທີ່ໂຮງຮຽນກົດໝາຍ ຂ້າພະເຈົ້າ ຈະຕ້ອງບຸກບືນ, ສູ້ຊົນຕໍ່ອຸປະສັກຕ່າງໆ ທີ່ຈະເກີດຂຶ້ນໃນຂ້າງໜ້າ, ຈະຕັ້ງໃຈຮໍ່າຮຽນ ແລະ ເວລາຫວ່າງ ກໍ່ຈະພະຍາຍາມຂຽນບົດເລື່ອງ ເພື່ອໃຫ້ໄດ້ອອກສູ່ສາຍຕາຂອງຜູ້ອ່ານ. ເລື່ອງທີ່ຜ່ານມານັ້ນ ຄົງມີຫລາຍອັນຂາດຕົກບົກຜ່ອງ ແລະ ບໍ່ໄດ້ຕາມໃຈຂອງຜູ້ອ່ານ. ແຕ່ເຖິງແນວໃດກໍ່ຕາມ ຂ້າພະເຈົ້າຂໍຝາກຄວາມຫວັງ ໄວ້ກັບທ່ານຜູ້ອ່ານ, ອ້າຍ, ເອື້ອຍ, ເພື່ອນມິດສະຫາຍ ໃຫ້ການຕໍານິຕິຊົມ, ຊ່ວຍ

ປະກອບຄຳຄິດຄຳເຫັນ ເພື່ອໃຫ້ບົດຂຽນຂອງຂ້າພະເຈົ້າ ມີຄຸນນະພາບດີກວ່ານີ້

**ຂໍຂອບໃຈ.**

ວຽງຈັນ, ວັນທີ 14 / 11 / 1995

ພອງເພັດ ບົວພະຈັນ



ທິດາຈັນ



ພວງເພັດ ບົວພະຈັນ

UNICEF
ອຸຍນິເຊັບ